PDF Compressor Free Version

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບົດລາຍງານ

ຜົນການຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂຮງງານ ຜະລິດອາຊິດຊຸນຟຸລິກ ຢູ່ບ້ານ ແກ້ງຫຼວງ, ເມືອງພະລານໄຊ ແຂວງສະຫວັນນະເຂດ ຂອງບໍລິສັດ ລາວມິໄຊ ຈຳກັດ

ສິງຫາ 2017

PDF Compressor Free Version

ສາລະບານ

1. ບົດລາຍງານ
2. ບົດປະກອບຄຳເຫັນ
3. ບົດບັນທຶກ

3.1 ເອກະສານຄັດຕິດ 1

- ໜັງສືເຖິງແຂວງ ແລະ ບໍລິສັດ
- ຕາຕະລາງເວລາ
- ລາຍຊື່ຜູ້ເຂົ້າຮ່ວມ
- ບົດສະຫຼຸບຫຍໍ້
- ເອກະສານທີ່ກ່ຽວຂ້ອງ

4. ເອກະສານຄັດຕິດທີ 2

- ຮູບພາບຕົວຈິງໃນພາກສະໜາມ

PDF Compressor Free Version

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
===== 00000 =====

ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ
ພະແນກ ຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມໂຄງການ

ເລກທີ 434/ກປສສ.ພຄຕ
ນະຄອນຫຼວງວຽງຈັນ, ວັນທີ 30 . 8 . 2017

ຮຽນ: ທ່ານ ຫົວໜ້າ ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ

ເລື່ອງ: ລາຍງານຜົນການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມໂຄງການ ໃບພາກສະໜາມ ສຳລັບ ໂຮງງານ ຜະລິດອາຊິດຊຸນຟຸລິກ ຢູ່ບ້ານ ແກ້ງຫຼວງ, ເມືອງພະລານໄຊ, ແຂວງສະຫວັນນະເຂດ ຂອງບໍລິສັດ ລາວມີໄຊ ຈຳກັດ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ສະບັບເລກທີ 501/ກຊສ, ລົງວັນທີ 30 ສິງຫາ 2011;
- ອີງຕາມ ບົດບັນທຶກ ການລົງຕິດຕາມກວດກາ ຄັ້ງວັນທີ 9 ສິງຫາ 2017.

ພະແນກ ຄຸ້ມຄອງ ແລະ ຕິດຕາມກວດກາໂຄງການ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບວ່າ: ໃນວັນທີ 09/08/2017 ຄະນະວິຊາການຕິດຕາມກວດກາ ໄດ້ລົງກວດກາ, ກົມຄວບຄຸມມົນລະພິດ, ສະຖາບັນຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ), ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ, ພະແນກກວດກາລັດ ແຂວງສະຫວັນນະເຂດ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງສະຫວັນນະເຂດ, ຫ້ອງການ ຊສ ເມືອງພະລານໄຊ, ນາຍບ້ານແກ້ງຫຼວງ ແລະ ທ່ານ ສຸລະພົນ ສຸນທະລາວົງ ຜູ້ອຳນວຍການ ບໍລິສັດ ລາວມີໄຊ ຈຳກັດ ທີ່ເປັນເຈົ້າຂອງໂຄງການ ໄດ້ພ້ອມກັນລົງກວດກາການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂຮງງານດັ່ງກ່າວ ເຊິ່ງມີລາຍລະອຽດການເຄື່ອນໄຫວ ດັ່ງລຸ່ມນີ້:

ຄະນະວິຊາການ ໄດ້ລົງພົບປະກັບປະຊາຊົນບ້ານແກ້ງຫຼວງ ເພື່ອຮັບຟັງຂໍ້ຄິດເຫັນ ແລະ ຂໍ້ສະເໜີຕ່າງໆ ກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຂອງໂຮງງານ ເຫັນວ່າ ໃນເດືອນ 4 ປີ 2017 ແມ່ນມີກິ່ນຂີ້ ອອກຈາກໂຮງງານ, ໃນວັນທີ 8 ມິຖຸນາ 2017 ເປັນຊ່ວງເລີ່ມທຳການຜະລິດໃໝ່ ເຮັດໃຫ້ເກີດອາຍແກ໊ສ (SO_2) ອອກສູ່ອາກາດ ແລ້ວຕົກໃສ່ຕົ້ນນາຂອງປະຊາຊົນ, ໃນວັນທີ 22-23 ກໍລະກົດ 2017 ເກີດມີກິ່ນຂີ້ຈາກໂຮງງານ ເຊິ່ງຕາມການລາຍງານຂອງບໍລິສັດ ແມ່ນເກີດຈາກແກັດຮົ່ວບາງຈຸດ, ຕໍ່ກັບບັນຫາດັ່ງກ່າວ ທາງ ພະແນກ ຊສ ແຂວງ ໄດ້ລົງກວດກາ ຂະແໜງການທີ່ກ່ຽວຂ້ອງແຂວງ, ເມືອງ ແລະ ບ້ານ ໄດ້ລົງກວດກາ, ເກັບກຳຂໍ້ມູນ ແລະ ຊີ້ແຈງຄ່າ ເສຍຫາຍແລ້ວ ພ້ອມທັງ ປັບປຸງແກ້ໄຂ ໂດຍການຈອດທໍ່ສິ່ງແກ໊ສບ່ອນທີ່ຮົ່ວ, ຈາກນັ້ນ ໄດ້ເຂົ້າພົບບໍລິສັດ ເພື່ອຮັບຟັງ ການລາຍງານສະພາບລວມໂດຍຫຍໍ້ ກ່ຽວກັບ ຄວາມຄືບໜ້າ ແລະ ການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຮງງານໃນໄລຍະຜ່ານມາ ເຫັນວ່າ ໂຮງງານດັ່ງກ່າວ ເລີ່ມດຳເນີນການຜະລິດອາຊິດແຕ່ປີ 2012 ມາເຖິງເດືອນ 7 ປີ 2017 ແມ່ນເກີດບັນຫາຜົນກະທົບຈາກການດຳເນີນ

PDF Compressor Free Version

ການຜະລິດຂອງໂຮງງານ ໂດຍສະເພາະ ບັນຫາກິ່ນຂີ ແລະ ມີອາຍແກ໊ສ (SO2) ອອກສູ່ອາກາດ ເຊິ່ງຕາມການລາຍ ງານຂອງບໍລິສັດ ຮູ້ວ່າ: 1) ບັນຫາກິ່ນຈາກເຕົາຫຼອມມາດ ທີ່ຢູ່ໃນຮູບແບບເປີດໃນເມື່ອກ່ອນ (ປະຈຸບັນ ແມ່ນໃຊ້ລະບົບ ປິດແລ້ວ, ບັນຫາກິ່ນຂີ່ຫຼຸດລົງ ແລະ ມີບາງບໍລິເວນທີ່ມີລົມພັດ), 2) ບັນຫາອາຍແກ໊ສແມ່ນເກີດຈາກການເປີດ-ປິດ ເຄື່ອງຈັກ ເຮັດໃຫ້ມີອາຍແກ໊ສ (SO2) ອອກສູ່ອາກາດ ແລະ ພະລັງງານນ້ຳໃຊ້ໃນຂະບວນການຜະລິດ ບາງຄັ້ງຍັງບໍ່ ທັນພຽງພໍ. ຕໍ່ກັບບັນຫາດັ່ງກ່າວ ໄລຍະຜ່ານມາ ທາງພາກສ່ວນທີ່ກ່ຽວຂ້ອງສູນກາງ, ແຂວງ, ເມືອງ ແລະ ອຳນາດການ ປົກຄອງບ້ານ ກໍ່ໄດ້ປະສານສົມທົບກັບບໍລິສັດ ເພື່ອແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນຈາກໂຮງງານເປັນປົກກະຕິ ແລະ ດີ ຂຶ້ນກວ່າເກົ່າ ພ້ອມທັງ ມີການຊີ້ແຈງເຜີຍແຜ່ລະປຸກໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບຕາມຄວາມເໝາະສົມ. ນອກນັ້ນ, ທາງບໍລິສັດ ຍັງໄດ້ກວດກາສຸຂະພາບຂອງພະນັກງານ-ກຳມະກອນ ແລະ ປະຊາຊົນທີ່ຢູ່ໃກ້ຄຽງເຂດໂຮງງານ ຈຳນວນ 1 ຄັ້ງຕໍ່ປີ, ວັດແທກຄຸນນະພາບອາກາດ ປີລະຄັ້ງ, ຕິດຕາມກວດກາຄຸນນະພາບນ້ຳ ທຸກອາທິດ ແລະ ລາຍງານຄວາມ ຄືບໜ້າຂອງໂຮງງານເປັນປະຈຳ ພ້ອມທັງ ມີການແກ້ໄຂບັນຫາຕາມຄຳແນະນຳຂອງຄະນະວິຊາການຕິດຕາມກວດກາ ໃນຄັ້ງກ່ອນເຊັ່ນ: ປັບປຸງລະບົບການຜະລິດຂອງເຄື່ອງຈັກເປັນຕົ້ນ: ໝໍ້ຕົ້ມອາຍນ້ຳ ແລະ ລະບົບແລກປ່ຽນຫາດ ເພື່ອ ເພີ່ມປະສິດທິພາບໃນການຜະລິດ ແລະ ປັບປຸງໂຮງເຕົາຫຼອມມາດ ໂດຍໃຊ້ລະບົບປິດ, ພາຍຫຼັງ ໄດ້ຮັບຟັງບໍລິສັດລາຍ ງານແລ້ວ ຄະນະວິຊາການ ກໍ່ໄດ້ລົງກວດກາພື້ນທີ່ຕົວຈິງເປັນຕົ້ນ: ໂຮງງານຜະລິດອາຊິດ, ສາງເກັບມ້ຽນມາດ, ສານເຄມີ ແລະ ອຸປະກອນຕ່າງ, ສະຖານທີ່ຖິ້ມຂີ້ເຫຍື້ອ ແລະ ອ່າງເກັບນ້ຳພາຍໃນໂຮງງານ ພ້ອມທັງ ວັດແທກຄຸນນະພາບນ້ຳຄ່າ ພາລາເມເຕີ້ພື້ນຖານ(pH, EC, DO ແລະ ອຸນຫະພູມ) 3 ຈຸດຄື: ອ່າງເກັບນ້ຳ 1 ແລະ 2 ຂອງບໍລິສັດ ແລະ ຫ້ວຍນ້ຳ ກະຫຼອງ. ຈາກນັ້ນ ຄະນະວິຊາການລົງຕິດຕາມກວດກາພາກສະໜາມ ກໍ່ໄດ້ມີການປະຊຸມປຶກສາຫາລື ກ່ຽວກັບ ບັນຫາທີ່ພົບເຫັນໃນການເຄື່ອນໄຫວຕິດຕາມກວດກາ ພ້ອມທັງສ້າງບົດບັນທຶກຮ່ວມກັນ (ບົດບັນທຶກຄັດຕິດມາພ້ອມ ນີ້).

ຜ່ານການລົງຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ຂອງໂຮງງານ ເຫັນວ່າ ບໍລິສັດ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດຕາມຄຳແນະນຳຂອງຄະນະວິຊາ ການຕິດຕາມກວດກາສິ່ງແວດລ້ອມໂຄງການໄດ້ດີລົມຄວນເປັນຕົ້ນ: ປັບປຸງລະບົບການຜະລິດຂອງເຄື່ອງຈັກ, ການ ແກ້ໄຂບັນຫາຕ່າງໆ, ການລາຍງານຄວາມຄືບໜ້າຂອງໂຄງການປະຈຳໄຕມາດ, ການປະສານສົມທົບ ແລະ ຕິດຕາມ ກວດກາຮ່ວມກັບຂະແໜງ ການທ້ອງຖິ່ນເປັນປະຈຳ, ນອກນັ້ນ ຍັງໄດ້ກວດກາສຸຂະພາບຂອງພະນັກງານ-ກຳມະກອນ ແລະ ປະຊາຊົນທີ່ຢູ່ໃກ້ຄຽງເຂດໂຮງງານ ຈຳນວນ 1 ຄັ້ງຕໍ່ປີ, ວັດແທກຄຸນນະພາບອາກາດ ປີລະຄັ້ງ, ຕິດຕາມກວດກາຄຸນ ນະພາບນ້ຳ ທຸກອາທິດ, ແຕ່ເຖິງຢ່າງໃດກໍ່ຕາມ ການປັບປຸງລະບົບການຜະລິດຂອງເຄື່ອງຈັກ ແລະ ບໍ່ຫຼອມມາດລະບົບປິດ ຂອງໂຮງງານ ເຫັນວ່າ ຍັງເກີດບັນຫາອາຍແກ໊ສຮົ່ວໃນຊ່ວງດຳເນີນການຜະລິດ (1 ຄັ້ງ) ແລະ ມີກິ່ນຂີ່ອອກສູ່ພາຍນອກ ບາງເວລາທີ່ມີລົມພັດ, ຕໍ່ກັບບັນຫາດັ່ງກ່າວ ຄະນະວິຊາການຕິດຕາມກວດກາກໍ່ໄດ້ແນະນຳໃຫ້ບໍລິສັດ ສືບຕໍ່ປັບປຸງ ລະບົບການຜະລິດຂອງເຄື່ອງຈັກ ແລະ ບໍ່ຫຼອມມາດ ເພື່ອບໍ່ໃຫ້ມີກິ່ນຂີ່ອອກສູ່ພາຍນອກ ພ້ອມທັງ ແກ້ໄຂບັນຫາ ຕ່າງໆທີ່ເກີດຂຶ້ນໃຫ້ທັນກັບເຫດການ. ທາງ ພຄຕ ຈຶ່ງໄດ້ອ່າງບົດປະກອບຄຳເຫັນເຖິງ ບໍລິສັດລາວມີໄຊ ຈຳກັດ (ເອກະສານຄັດຕິດມາພ້ອມນີ້).

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອໃຫ້ທິດຊີ້ນຳຕາມທາງຄວນດ້ວຍ.

ຫົວໜ້າພະແນກ

ເພັດສະໝອນ ອິນໄພຍະລາດ

PDF Compressor Free Version

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

===== 00000 =====

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ

ເລກທີ 2425 /ກຊສ.ກປສສ.ພຄຕ

ນະຄອນຫຼວງວຽງຈັນ, ວັນທີ 31.08.2017

ເຖິງ: ທ່ານ ຜູ້ອຳນວຍການບໍລິສັດ ລາວມິໄຊ ຈຳກັດ

ເລື່ອງ: ປະກອບຄຳເຫັນ ກ່ຽວກັບ ຜົນການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມ ຂອງໂຮງງານຜະລິດອາຊິດຊຸນຟູລິກ ຢູ່ບ້ານ ແກ້ງຫຼວງ, ເມືອງພະລານໄຊ, ແຂວງສະຫວັນນະເຂດ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ສະບັບເລກທີ 501/ກຊສ, ລົງວັນທີ 30 ສິງຫາ 2011;
- ອີງຕາມ ບົດບັນທຶກ ການລົງຕິດຕາມກວດກາ ຄັ້ງວັນທີ 9 ສິງຫາ 2017.

ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ກປສສ), ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ມີຄວາມຍິນດີແຈ້ງມາຍັງທ່ານຊາບວ່າ: ຜ່ານການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມ ໂຮງງານຜະລິດອາຊິດຊຸນຟູລິກ ຢູ່ບ້ານ ແກ້ງຫຼວງ, ເມືອງພະລານໄຊ, ແຂວງສະຫວັນນະເຂດ ກປສສ ເຫັນວ່າ ບໍລິສັດ ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການໄດ້ດີສົມຄວນ ພ້ອມທັງ ມີການປັບປຸງລະບົບການຜະລິດຂອງເຄື່ອງຈັກ ແລະ ການແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໂດຍສົມທົບກັບຂະແໜງການທີ່ກ່ຽວຂ້ອງທ້ອງຖິ່ນເປັນປະຈຳ, ແຕ່ເຖິງຢ່າງໃດກໍ່ຕາມ ເພື່ອຮັບປະກັນໃຫ້ວຽກງານການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມໂຄງການ ດຳເນີນໄປຢ່າງຕໍ່ເນື່ອງ ແລະ ມີປະສິດທິຜົນ ກປສສ ຈຶ່ງສະເໜີໃຫ້ບໍລິສັດ ເອົາໃຈໃສ່ຈັດຕັ້ງປະຕິບັດຕາມຄຳເຫັນດັ່ງລຸ່ມນີ້.

1. ສືບຕໍ່ປັບປຸງລະບົບການຜະລິດຂອງເຄື່ອງຈັກໃຫ້ໄດ້ມາດຕະຖານ ເພື່ອບໍ່ໃຫ້ເກີດບັນຫາຈາກການເປີດ-ປິດ ຂອງເຄື່ອງຈັກ ແລະ ເຮັດໃຫ້ມີສານ **SO2** ອອກສູ່ພາຍນອກ ສິ່ງຜົນກະທົບຕໍ່ປະຊາຊົນອີກ;
2. ສືບຕໍ່ປັບປຸງບໍ່ຫຼອມມາດ ໃຫ້ດີກວ່າເກົ່າ ເພື່ອບໍ່ໃຫ້ມີກິ່ນຂີ້ເຫຍອອກສູ່ພາຍນອກ;
3. ກວດກາຄຸນນະພາບວັດສະດຸການສ້ອມແປງຂອງເຄື່ອງຈັກເປັນປະຈຳ ເພື່ອບໍ່ໃຫ້ເກີດບັນຫາຮົ່ວຊຶມ ໃນຕໍ່ໜ້າ;
4. ໃຫ້ບໍລິສັດ ມີມາດຕະການປ້ອງກັນ ບໍ່ໃຫ້ເສດມາດຕິກເຮ່ຍຕາມເສັ້ນທາງ ແລະ ຈຸດບໍ່ຫຼອມມາດ ໃນຂອບເຂດໂຮງງານ;
5. ບໍລິສັດ ຕ້ອງຈັດສັນສະຖານທີ່ເກັບມ້ຽນເສດຖິ້ງບັນຈຸມາດສະເພາະ ແລະ ມີການກຳຈັດທີ່ຖືກລະບຽບ ເພື່ອຫຼີກລ້ຽງບໍ່ໃຫ້ປະຊາຊົນນຳໄປໃຊ້ອີກ;
6. ບໍລິສັດ ຕ້ອງປັບປຸງຄອງລະບາຍນ້ຳອ້ອມຮອບພາຍໃນໂຮງງານໃຫ້ໄດ້ມາດຕະຖານ ໂດຍການສ້າງຄອງລະບາຍນ້ຳເປັນຄອນກົດ ແລ້ວປ່ອຍລົງສູ່ອ່າງບຳບັດນ້ຳ ກ່ອນປ່ອຍອອກພາຍນອກ;
7. ປັບປຸງອ່າງເກັບນ້ຳ ໃຫ້ເປັນລະບົບບຳບັດນ້ຳ ໃຫ້ໄດ້ມາດຕະຖານ;

PDF Compressor Free Version

8. ປັບປຸງສາງເກັບມ້ຽນສານເຄມີ ໃຫ້ເປັນລະບົບປິດ ເພື່ອປ້ອງກັນ ແລະ ຮັບປະກັນຄວາມປອດໄພ;
9. ໃຫ້ບໍລິສັດ ຮີບຮ້ອນເອົາຕົວຢ່າງດິນ ແລະ ນ້ຳ ໃນເຂດບ້ານແກ້ງຫຼວງ ໄປວິໄຈ ແລະ ແຈ້ງຜົນການວິໄຈ ດັ່ງກ່າວໃຫ້ຂະແໜງການທີ່ກ່ຽວຂ້ອງ ແລະ ປະຊາຊົນຮັບຊາບ;
10. ໃຫ້ບໍລິສັດ ສືບຕໍ່ຂຸ່ຍສະໜອງນ້ຳບາດານໃຫ້ປະຊາຊົນບ້ານແກ້ງຫຼວງຕາມຄວາມເໝາະ;
11. ໃຫ້ບໍລິສັດ ປູກຕົ້ນໄມ້ເພີ່ມ ໃນເຂດພື້ນທີ່ອ້ອມໂຮງງານ ເພື່ອຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ;
12. ກໍລະນີ ມີເຫດການສຸກເສີນເກີດຂຶ້ນ ບໍລິສັດ ຕ້ອງລາຍງານສະພາບ ແລະ ບັນຫາທີ່ເກີດຂຶ້ນໃຫ້ ກຊສ ພະແນກ ຊສ ແຂວງ ສະຫວັນນະເຂດ, ຫ້ອງການ ຊສ ເມືອງ ແລະ ຫ້ອງການ ອຸດສາຫະກຳ ແລະ ຫັດຖະກຳ ເມືອງພະລານໄຊ ຮັບຊາບພາຍໃນ 24 ຊົ່ວໂມງ;

ດັ່ງນັ້ນ, ຈຶ່ງສະເໜີມາຍັງ ບໍລິສັດ ເພື່ອໃຫ້ຄວາມຮ່ວມມື ແລະ ຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

ຫົວໜ້າກອງ

ຖາວອນ ວິງໄພສີ

ສຳເນົານຳສົ່ງ:

1. ທ່ານ ລັດຖະມົນຕີ (ກຊສ) 1 ສະບັບ
2. ທ່ານ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ 1 ສະບັບ
3. ທ່ານ ເຈົ້າແຂວງ ແຂວງສະຫວັນນະເຂດ 1 ສະບັບ
4. ທ່ານ ຮອງລັດຖະມົນຕີ (ກຊສ) ທ່ານລະ 1 ສະບັບ
5. ທ່ານ ເຈົ້າເມືອງ ເມືອງພະລານໄຊ 1 ສະບັບ
6. ສຳເນົາ 1 ສະບັບ

PDF Compressor Free Version

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບົດບັນທຶກ

ການເຄື່ອນໄຫວຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໂຮງງານ ຜະລິດອາຊິດຊຸນຟູລິກ ຢູ່ບ້ານ ແກ້ງຫຼວງ, ເມືອງພະລານໄຊ, ແຂວງສະຫວັນນະເຂດ ຂອງບໍລິສັດ ລາວມີໄຊ ຈຳກັດ ໃນວັນທີ 09/08/2017

ຄະນະວິຊາການຕິດຕາມກວດກາສິ່ງແວດລ້ອມໂຄງການ ໃນພາກສະໜາມ ເຊິ່ງນຳພາໂດຍທ່ານ ພູວົງ ຫຼວງໄຊຊະນະ ຫົວໜ້າກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໂດຍໄດ້ສົມທົບກັບຂະແໜງການທີ່ກ່ຽວຂ້ອງພາຍໃນກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກົມກວດກາ, ກົມຄວບຄຸມມົນລະພິດ, ສະຖາບັນຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ), ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ, ພະແນກກວດກາລັດ ແຂວງສະຫວັນນະເຂດ, ພະແນກ ຊສ ແຂວງສະຫວັນນະເຂດ, ຫ້ອງການ ຊສ ເມືອງ ພະລານໄຊ, ອຳນາດການປົກຄອງ ບ້ານແກ້ງຫຼວງ ແລະ ຜູ້ຕາງໜ້າບໍລິສັດ ລາວມີໄຊ ຈຳກັດ ໂດຍທ່ານ ສຸລະພົນ ສຸນທະລາວົງ ຜູ້ອຳນວຍການ ບໍລິສັດ ພ້ອມ ຄະນະ ໄດ້ພ້ອມກັນດຳເນີນການເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມຂອງໂຄງການ, ເງື່ອນໄຂຂອງ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ, ການປະຕິບັດຕາມບົດບັນທຶກໃນ ຄັ້ງວັນທີ 09 ກັນຍາ 2015 ໃນໄລຍະຜ່ານມາ. ລາຍລະອຽດ ກ່ຽວກັບ ລາຍຊື່ພາກສ່ວນເຂົ້າຮ່ວມ ມີໃນເອກະສານຄັດຕິດ.

ໃນການລົງຕິດຕາມຄັ້ງນີ້ ຄະນະວິຊາການ ໄດ້ລົງພົບປະກັບປະຊາຊົນບ້ານແກ້ງຫຼວງ ເພື່ອຮັບຟັງຂໍ້ຄິດເຫັນ ແລະ ຂໍ້ສະເໜີ ຕ່າງໆ ກ່ຽວກັບ ຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຂອງໂຮງງານ, ໄດ້ລົງກວດກາພາກສະໜາມເຂດ ໂຮງງານຜະລິດອາຊິດ, ສາງເກັບມ້ຽນມາດ, ສານເຄມີ ແລະ ອຸປະກອນຕ່າງ, ສະຖານທີ່ຖິ້ມຂີ້ເຫຍື້ອ, ອ່າງເກັບນ້ຳ, ວັດແທກຄຸນ ນະພາບນ້ຳຄ່າພາລາເມເຕີ້ພື້ນຖານ(pH, EC, DO ແລະ ອຸນຫະພູມ) 3 ຈຸດຄື: ອ່າງເກັບນ້ຳ 1 ແລະ 2 ຂອງບໍລິສັດ ແລະ ຫ້ວຍນ້ຳກະຫຼອງກະລາ . ຫຼັງຈາກນັ້ນ ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຂອງໂຮງງານໃນໄລຍະຜ່ານມາ ແລະ ໄດ້ປະຊຸມປຶກສາຫາລືປະກອບຄຳຄິດເຫັນ. ທັງສອງຝ່າຍໄດ້ຕົກລົງເຫັນດີ ບັນທຶກບັນຫາ ແລະ ຂໍ້ແນະນຳ ກ່ຽວກັບ ການແກ້ໄຂ ແລະ ປັບປຸງບັນຫາ ດັ່ງລຸ່ມນີ້:

1. ສະພາບລວມຂອງໂຄງການ

ໂຮງງານຜະລິດອາຊິດຊຸນຟູລິກ ຕັ້ງຢູ່ບ້ານແກ້ງຫຼວງ, ເມືອງພະລານໄຊ, ແຂວງສະຫວັນນະເຂດ ຂອງບໍລິສັດ ລາວມີໄຊ ຈຳກັດ, ມີເນື້ອທີ່ລວມປະທານ ທັງໝົດ 12 ຮຕ, ອາຍຸລວມປະທານ 15 ປີ. ໂຮງງານດັ່ງກ່າວ ເປັນການລົງທຶນ ຂອງ ນັກທຸລະກິດຄົນໄທ 100%. ທາງໂຮງງານໄດ້ເລີ່ມດຳເນີນການຜະລິດຕັ້ງແຕ່ປີ 2012 ເປັນຕົ້ນມາ ເຊິ່ງຜະລິດນ້ຳຢາເຄມີອາ ຊິດຊຸນຟູລິກ ເພື່ອສະໜອງໃຫ້ແກ່ໂຄງການຂຸດຄົ້ນຄຳ-ທອງ ເຊໂປນ. ໃນຂະບວນການຜະລິດ ແມ່ນຈະນຳເອົາສານມາດ ແຫ້ງມາເຜົາໄໝ້, ປ່ຽນແປງທາດຊຸນເຟີໄດອ໋ອກໄຊ ແລະ ການດູດຊຶມຂອງທາດ SO3, ຄວາມສາມາດໃນການຜະລິດ ປະມານ 42,000 ຫາ 44,000 ໂຕນ/ປີ, ນຳໃຊ້ນ້ຳໝອງປະມານ 102 ມ^3/ມື້, ມີພະນັກງານທັງໝົດ 43 ຄົນ. ໃນໄລຍະ ຜ່ານມາ ນັບແຕ່ປີ 2012 ມາເຖິງເດືອນ 7 ປີ 2017 (ໃນປີ 2016 ບໍ່ໄດ້ທຳການຜະລິດ ຍ້ອນບໍ່ມີການສັ່ງຊື້) ໄດ້ເກີດບັນຫາ ຜົນກະທົບຈາກການດຳເນີນການຜະລິດຂອງໂຮງງານ ໂດຍສະເພາະແມ່ນກິ່ນຂີ້ ເຊິ່ງຕາມການລາຍງານຂອງບໍລິສັດ ຮູ້ວ່າ: 1) ບັນຫາດັ່ງກ່າວໃນເບື້ອງຕົ້ນແມ່ນເກີດຈາກການເປີດ-ປິດເຄື່ອງຈັກ ເຮັດໃຫ້ມີອາຍແກ໊ສ (SO_2) ອອກສູ່ອາກາດ ແລະ ພະລັງງານນຳໃຊ້ໃນຂະບວນການຜະລິດ ບາງຄັ້ງຍັງບໍ່ທັນພຽງພໍ, 2) ບັນຫາກິ່ນຈາກເຕົາຫຼອມມາດ ທີ່ຢູ່ໃນຮູບແບບເປີດໃນ ເມື່ອກ່ອນ (ປະຈຸບັນ ແມ່ນໃນຮູບແບບລະບົບປິດແລ້ວ). ຕໍ່ກັບບັນຫາດັ່ງກ່າວ ໄລຍະຜ່ານມາ ທາງພາກສ່ວນທີ່ກ່ຽວຂ້ອງ

PDF Compressor Free Version

ສູນກາງ, ແຂວງ, ເມືອງ ແລະ ອຳນາດການປົກຄອງບ້ານ ກໍ່ໄດ້ປະສານສົມທົບກັບບໍລິສັດ ເພື່ອແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນຈາກໂຮງງານເປັນປົກກະຕິ ແລະ ດີຂຶ້ນກວ່າເກົ່າ ພ້ອມທັງ ໄດ້ມີການຊົດເຊີຍຜົນລະປຸກໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບ. ນອກນັ້ນ, ທາງບໍລິສັດ ຍັງໄດ້ກວດກາສຸຂະພາບຂອງພະນັກງານ-ກຳມະກອນ ແລະ ປະຊາຊົນທີ່ຢູ່ໃກ້ຄຽງເຂດໂຮງງານ ຈຳນວນ 1 ຄັ້ງຕໍ່ປີ, ຈັດແທກຄຸນນະພາບອາກາດ ປີລະຄັ້ງ, ຕິດຕາມກວດກາຄຸນນະພາບນ້ຳ ທຸກອາທິດ ແລະ ລາຍງານຄວາມຄືບໜ້າຂອງໂຮງງານເປັນປະຈຳ.

2. **ບັນຫາຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນການກວດກາພາກສະໜາມຄັ້ງນີ້**

2.1 ການຈັດຕັ້ງປະຕິບັດ ຕາມຍົດບັນທຶກ ໃນຄັ້ງວັນທີ 09 ກັນຍາ 2015:

- ບໍລິສັດ ໄດ້ມີການປັບປຸງລະບົບການຜະລິດຂອງເຄື່ອງຈັກແລ້ວເປັນຕົ້ນ: ໜ້ຕົ້ມອາຍນ້ຳ ແລະ ລະບົບແລກປ່ຽນທາດ ເພື່ອເພີ່ມປະສິດທິພາບໃນການຜະລິດ;
- ບໍລິສັດ ໄດ້ປັບປຸງໂຮງເຕົາຫຼອມມາດ ໂດຍໃຊ້ລະບົບປິດ ແລະ ເຫັນວ່າ ບັນຫາກິ່ນຂີ້ແມ່ນຫຼຸດຜ່ອນລົງໃນເຂດດັ່ງກ່າວ;
- ຍັງບໍ່ທັນໄດ້ເອົາຕົວຢ່າງດິນ ແລະ ນ້ຳ ໃນເຂດບ້ານແກ້ງຫຼວງ ໄປວິໄຈ ແລະ ແຈ້ງຜົນການວິໄຈດັ່ງກ່າວໃຫ້ຂະແໜງການທີ່ກ່ຽວຂ້ອງ ແລະ ປະຊາຊົນຮັບຊາບ;
- ຍັງບໍ່ທັນຊ່ວຍເຫຼືອການສະໜອງນ້ຳບາດານໃຫ້ປະຊາຊົນບ້ານແກ້ງຫຼວງ.

2.2 ບັນຫາບັນຫາຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ໃນການກວດກາພາກສະໜາມຄັ້ງນີ້

- ໃນເດືອນ 4 ປີ 2017 ມີໜັງສືສະເໜີຈາກປະຊາຊົນບ້ານແກ້ງຫຼວງ (ບໍ່ອອກນາມ) ຫາ ພະແນກ ຊຊສ ແຂວງ ແລະ ພະແນກກວດກາລັດ ແຂວງສະຫວັນນະເຂດ ກ່ຽວກັບ ບັນຫາກິ່ນຂີ ທີ່ເກີດຈາກໂຮງງານ ເຊິ່ງບັນຫາດັ່ງກ່າວ ທາງ ພະແນກ ຊຊສ ແຂວງ ສົມທົບກັບ ຂະແໜງການທີ່ກ່ຽວຂ້ອງແຂວງ, ເມືອງ ແລະ ບ້ານ ໄດ້ລົງກວດກາ, ເກັບກຳຂໍ້ມູນ ພ້ອມທັງ ສ້າງບົດບັນທຶກຮ່ວມກັນ ດັ່ງເອກະສານຄັດຕິດພ້ອມນີ້;
- ໃນວັນທີ 8 ມິຖຸນາ 2017 ເປັນຊ່ວງເລີ່ມທຳການຜະລິດໃໝ່ ເຮັດໃຫ້ເກີດອາຍແກ໊ສ (SO_2) ອອກສູ່ອາກາດ ແລ້ວຕົກໃສ່ຕົ້ນນາຂອງປະຊາຊົນ. ຕໍ່ຜົນກະທົບດັ່ງກ່າວທາງອຳນາດການປົກຄອງເມືອງ, ບ້ານແກ້ງຫຼວງ, ປະຊາຊົນທີ່ໄດ້ຮັບຜົນກະທົບ ແລະ ບໍລິສັດ ໄດ້ລົງກວດກາ ແລະ ເກັບກຳຂໍ້ມູນ ພ້ອມທັງ ດຳເນີນການຊົດເຊີຍຄ່າເສຍຫາຍແລ້ວ;
- ໃນວັນທີ 22-23 ກໍລະກົດ 2017 ໄດ້ເກີດມີກິ່ນຂີ້ຜິດປົກກະຕິ ຈາກໂຮງງານ ເຊິ່ງຕາມການລາຍງານຂອງ ບໍລິສັດ ແມ່ນເກີດຈາກແກ໊ດຮົ່ວບາງຈຸດ ແລະ ກໍ່ໄດ້ມີການປັບປຸງແກ້ໄຂ ໂດຍການຈອດທໍ່ສິ່ງແກ໊ສບ່ອນທີ່ຮົ່ວ;
- ພົບເຫັນເສດມາດຕິກະເຮ່ຍຕາມເສັ້ນທາງ ແລະ ຈຸດເຕົາຫຼອມມາດ ໃນເຂດອ້ອມຂ້າງສາງເກັບມ້ຽນມາດ;
- ສະຖານທີ່ເກັບມ້ຽນເສດຖິ້ງບັນຈຸມາດຍັງບໍ່ເປັນລະບຽບ ແລະ ໃກ້ເກັບອ່າງເກັບນ້ຳຂອງໂຮງງານ;
- ຄອງລະບາຍນ້ຳພາຍໃນໂຮງງານ ບາງບ່ອນຍັງບໍ່ໄດ້ມາດຕະຖານ;
- ສາງເກັບມ້ຽນສານເຄມີຍັງບໍ່ເປັນລະບົບປິດ.

3. **ຂໍ້ແນະນຳ ຂອງຄະນະວິຊາການ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຄງການ ໃນພາກສະໜາມ ຄັ້ງນີ້:**

1. ບໍລິສັດ ສືບຕໍ່ຕ້ອງປັບປຸງລະບົບການຜະລິດຂອງເຄື່ອງຈັກໃຫ້ໄດ້ມາດຕະຖານ ບໍ່ໃຫ້ເກີດບັນຫາໃນການເປີດເຄື່ອງຈັກ ແລະ ເຮັດໃຫ້ມີສານ SO_2 ອອກສູ່ພາຍນອກ ສິ່ງຜົນກະທົບຕໍ່ປະຊາຊົນອີກ;
2. ບໍລິສັດ ໄດ້ມີການປັບປຸງບໍ່ຫຼອມມາດ ໃຫ້ດີກວ່າເກົ່າ ເພື່ອບໍ່ໃຫ້ມີກິ່ນຂີ້ອອກສູ່ພາຍນອກ;
3. ສະເໜີໃຫ້ບໍລິສັດ ກວດກາຄຸນນະພາບວັດສະດຸການສ້ອມແປງເຄື່ອງຈັກ ເປັນປະຈຳ;

PDF Compressor Free Version

4. ໃຫ້ບໍລິສັດ ມີມາດຕະການປ້ອງກັນ ບໍ່ໃຫ້ເສດມາດຕົກເຮ່ຍຕາມເສັ້ນທາງ ແລະ ຈຸດບໍ່ຫຼອມມາດ ໃນຂອບເຂດໂຮງງານ;
5. ບໍລິສັດ ຕ້ອງຈັດສັນສະຖານທີ່ເກັບມ້ຽນ ເສດຖົງບັນຈຸມາດສະເພາະ ແລະ ມີການກຳຈັດທີ່ຖືກລະບົບ ເພື່ອຫຼີກລ້ຽງບໍ່ໃຫ້ປະຊາຊົນນຳໄປໃຊ້ອີກ;
6. ໃຫ້ບໍລິສັດ ປັບປຸງຄອງລະບາຍນ້ຳອ້ອມຮອບພາຍໃນໂຮງງານ ໃຫ້ໄດ້ມາດຕະຖານ ໂດຍການ ສ້າງຄອງລະບາຍນ້ຳເປັນຄອນກຼີດ ແລ້ວປ່ອຍລົງສູ່ອ່າງບຳບັດນ້ຳ ກ່ອນປ່ອຍອອກພາຍນອກ;
7. ໃຫ້ບໍລິສັດ ປັບປຸງອ່າງເກັບນ້ຳ ເປັນລະບົບບຳບັດນ້ຳ ໃຫ້ໄດ້ມາດຕະຖານ;
8. ໃຫ້ບໍລິສັດ ປັບປຸງສາງເກັບມ້ຽນສານເຄມີ ໃຫ້ເປັນລະບົບປິດ ເພື່ອປ້ອງກັນ ແລະ ຮັບປະກັນຄວາມປອດໄພ;
9. ໃຫ້ບໍລິສັດ ຮີບຮ້ອນເອົາຕົວຢ່າງດິນ ແລະ ນ້ຳ ໃນເຂດບ້ານແກ້ງຫຼວງ ໄປວິໄຈ ແລະ ແຈ້ງຜົນການວິໄຈດັ່ງກ່າວໃຫ້ຂະແໜງການທີ່ກ່ຽວຂ້ອງ ແລະ ປະຊາຊົນຮັບຊາບ;
10. ໃຫ້ບໍລິສັດ ສືບຕໍ່ຊ່ວຍສະໜອງນ້ຳບາດານໃຫ້ປະຊາຊົນບ້ານແກ້ງຫຼວງຕາມຄວາມເໝາະ;
11. ສະເໜີໃຫ້ບໍລິສັດ ປູກຕົ້ນໄມ້ເພີ່ມ ໃນເຂດພື້ນທີ່ອ້ອມໂຮງງານ ເພື່ອຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ;
12. ກໍລະນີ ມີເຫດການສຸກເສີນເກີດຂຶ້ນ ບໍລິສັດ ຕ້ອງລາຍງານສະພາບ ແລະ ບັນຫາທີ່ເກີດຂຶ້ນ ໃຫ້ ກຊສ ພະແນກ ຊສ ແຂວງ ສະຫວັນນະເຂດ, ຫ້ອງການ ຊສ ເມືອງ ແລະ ຫ້ອງການ ອຸດສາຫະກຳ ແລະ ຫັດຖະກຳ ເມືອງພະລານໄຊ ຮັບຊາບພາຍໃນ 24 ຊົ່ວໂມງ;

4. ຂໍ້ຄິດເຫັນຕ່າງໆ ຂອງເຈົ້າຂອງໂຄງການ
   1. ບໍລິສັດ ລາວມີໄຊ ຈຳກັດ ເຫັນດີຕາມຄຳແນະນຳຂອງຄະນະວິຊາການກວດກາ ພາກສະໜາມໃນຄັ້ງນີ້;

ບົດບັນທຶກສະບັບນີ້ ສ້າງຂຶ້ນເພື່ອເປັນຫລັກຖານ ແລະ ເປັນຂໍ້ມູນອ້າງອີງ ໃນການຢັ້ງຢືນຜົນການເຄື່ອນໄຫວ ຕິດຕາມກວດກາສິ່ງແວດລ້ອມໂຄງການ ໃນພາກສະໜາມຄັ້ງນີ້ ແລະ ຕິດຕາມກວດກາ ໃນຕໍ່ໜ້າ.

ທີ່ເມືອງພະລານໄຊ, ວັນທີ 09 ສິງຫາ 2017

ບໍລິສັດ ລາວມີໄຊ ຈຳກັດ

ຜຸ້ບັນທຶກ

ຜຸລະພົບ ສຸນທະລາວົງ
Suraphon SUNTHARAWONG

ຕາງໜ້າພະແນກ ຊສ ແຂວງສະຫວັນນະເຂດ

ຫົວໜ້າຫ້ອງການ ຊສ ເມືອງ ພະລານໄຊ

ນາຍບ້ານແກ້ງຫຼວງ

ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ

ຄຳແດງ ພົມມະສານ

PDF Compressor Free Version

3.1 ເອກະສານຄັດຕິດ 1

- ໜັງສືເຖິງແຂວງ ແລະ ບໍລິສັດ
- ຕາຕະລາງເວລາ
- ລາຍຊື່ຜູ້ເຂົ້າຮ່ວມ
- ປຶດສະໜູບຫຍໍ້
- ເອກະສານທີ່ກ່ຽວຂ້ອງ

PDF Compressor Free Version

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
=====00000=====

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ

ເລກທີ 2055/ກຊສ.ກປສສ.ພຄຕ
ນະຄອນຫຼວງວຽງຈັນ, ວັນທີ 19.7.18

ຮຽນ: ທ່ານ ຫົວໜ້າພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ

ເລື່ອງ: ການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມໂຄງການ ໃນພາກສະໜາມ ສຳລັບ ໂຮງງານ ຜະລິດອາຊິດຊຸນຟຸລິກ ຢູ່ບ້ານ ເຫຼົ່າຫຼວງ, ເມືອງ ພະລານໄຊ, ແຂວງ ສະຫວັນນະເຂດ ຂອງ ບໍລິສັດ ລາວມີໄຊ ຈຳກັດ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ ລົງວັນທີ 18 ທັນວາ 2012;
- ອີງຕາມ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ສະບັບເລກທີ 501/ກຊສ, ລົງວັນທີ 30 ສິງຫາ 2011;
- ອີງຕາມ ໜັງສືສະເໜີພະແນກ ຊສ ແຂວງສະຫວັນນະເຂດ ສະບັບເລກທີ 590/ພຊສ.ສຂ, ລົງວັນທີ 24 ເມສາ 2017.

ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຂໍຖືເປັນກຽດສະເໜີມາຍັງທ່ານຊາບວ່າ: ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໄດ້ມີແຜນການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມ ໂຮງງານ ຜະລິດອາຊິດຊຸນຟຸລິກ ຢູ່ບ້ານ ເຫຼົ່າຫຼວງ, ເມືອງ ພະລານໄຊ, ແຂວງ ສະຫວັນນະເຂດ ຂອງ ບໍລິສັດ ລາວມີໄຊ ຈຳກັດ ໃນລະຫວ່າງວັນທີ 09-11/08/2017 ທີ່ແຂວງສະຫວັນນະເຂດ.

ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມໂຄງການ ດັ່ງກ່າວ ໄດ້ດຳເນີນໄປຢ່າງມີປະສິດທິຜົນ, ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຈຶ່ງຂໍເຊີນ ພາກສ່ວນການຈັດຕັ້ງຂອງທ່ານ ຈຳນວນ 3 ທ່ານ ເຂົ້າຮ່ວມນຳຄະນະວິຊາການ ທີ່ໄດ້ຮັບການແຕ່ງຕັ້ງ ໂດຍ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນການເຄື່ອນໄຫວວຽກງານພາກສະໜາມຄັ້ງນີ້ ແລະ ຊ່ວຍ ປະສານງານ ແລະ ເຊື້ອເຊີນຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ ແລະ ເມືອງ (ລາຍຊື່ພາກສ່ວນກ່ຽວຂ້ອງຂັ້ນທ້ອງ ຖິ່ນ ທີ່ຖືກເຊື້ອເຊີນເຂົ້າຮ່ວມ ມີໃນເອກະສານຄັດຕິດ) ເຂົ້າຮ່ວມໃນການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມ ໂຄງການ ໃນພາກສະໜາມຄັ້ງນີ້ດ້ວຍ. ສຳລັບຕາຕະລາງເວລາການເຄື່ອນໄຫວລະອຽດ ແມ່ນມີໃນເອກະສານຄັດ ຕິດມາພ້ອມນີ້.

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານໃຫ້ຄວາມຮ່ວມມີ ຕາມທາງຄວນດ້ວຍ.

ຮ. ຫົວໜ້າ ກອງ

ຖາວອນ ວົງໂພສີ

ໝາຍເຫດ:
ຕິດຕໍ່ພົວພັນທີ ທ. ລິດສະໜອນ 020 56595351

PDF Compressor Free Version

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ

ເລກທີ 2055 /ກຊສ.ກປສສ.ພຄຕ
ນະຄອນຫຼວງວຽງຈັນ, ວັນທີ 19 ມ 17

ເຖິງ: ທ່ານ ຜູ້ອຳນວຍການ ບໍລິສັດ ລາວມີໄຊ ຈຳກັດ

ເລື່ອງ: ການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມໂຄງການ ໃນພາກສະໜາມ ສຳລັບ ໂຮງງານ ຜະລິດອາ ຊິດຊຸນຟຸລິກ ຢູ່ບ້ານ ເຫຼົ່າຫຼວງ, ເມືອງ ພະລານໄຊ, ແຂວງ ສະຫວັນນະເຂດ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊ ລົງວັນ ທີ 18 ທັນວາ 2012;
- ອີງຕາມ ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ສະບັບເລກທີ 501/ກຊສ, ລົງວັນທີ 30 ສິງຫາ 2011;
- ອີງຕາມ ໜັງສືສະເໜີພະແນກ ຊສ ແຂວງສະຫວັນນະເຂດ ສະບັບເລກທີ 590/ພຊສ.ສຂ, ລົງວັນທີ 24 ເມສາ 2017.

ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ກປສສ) ຂໍຖືເປັນກຽດສະເໜີມາຍັງທ່ານຊາບວ່າ: ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ໄດ້ມີແຜນການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ ໂຮງງານ ຜະລິດອາຊິດຊຸນຟຸລິກ ຢູ່ບ້ານ ເຫຼົ່າຫຼວງ, ເມືອງ ພະລານໄຊ, ແຂວງ ສະຫວັນ ນະເຂດ ໃນລະຫວ່າງວັນທີ 09-11 /08/2017 ທີ່ ແຂວງສະຫວັນນະເຂດ.

ເພື່ອຮັບປະກັນໃຫ້ການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມ ໂຄງການໃນພາກສະໜາມຄັ້ງນີ້ ໄດ້ດຳ ເນີນໄປຢ່າງມີປະສິດທິຜົນ, ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຈຶ່ງສະເໜີມາຍັງທ່ານ ເພື່ອຮັບ ຊາບ ແລະ ກະກຽມວິຊາການ ທີ່ກ່ຽວຂ້ອງ ເພື່ອນຳສະເໜີບັນຫາຜົນກະທົບທີ່ເກີດຂຶ້ນຈາກໂຮງງານໃນໄລຍະຜ່ານ ມາ ແລະ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນການຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ພ້ອມທັງ ເຂົ້າຮ່ວມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຄະນະວິຊາການຂອງພວກເຮົາ ໃນການ ເຄື່ອນໄຫວວຽກງານໃນພາກສະໜາມຄັ້ງນີ້ ໃຫ້ບັນລຸຜົນຕາມຈຸດປະສົງທີ່ກ່າວມາຂ້າງເທິງ. ສຳລັບ ລາຍລະອຽດ ແຜນການເຄື່ອນໄຫວຕິດຕາມກວດກາສິ່ງແວດລ້ອມໂຄງການ ໃນພາກສະໜາມ ແມ່ນມີໃນເອກະສານຄັດຕິດ.

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອຮັບຊາບ ແລະ ໃຫ້ຄວາມຮ່ວມມື ຕາມທາງຄວນດ້ວຍ./.

ຮ. ຫົວໜ້າກອງ

ໝາຍເຫດ:
ຕິດຕໍ່ພົວພັນທີ ທ. ລິດສະໝອນ 020 56595351

ຖາວອນ ວິງໂພສີ

PDF Compressor Free Version

ຕາຕະລາງ: ການລົງກວດກາການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ຂອງໂຮງງານຜະລິດອາຊິດຊຸນຟູລິກ ຢູ່ບ້ານ ເລົ່າຫຼວງ, ເມືອງ ພະລານໄຊ, ແຂວງ ສະຫວັນນະເຂດ ຂອງບໍລິສັດ ລາວມີໄຊ ຈຳກັດ ໃນຄັ້ງວັນທີ 09 - 11/08/2017

ເວລາ	ເນື້ອໃນລາຍລະອຽດ	ຜູ້ຮັບຜິດຊອບ
ມື້ທີ 01 ວັນພຸດ, ວັນທີ 09/08/2017		
07:00	ຂົ້ນລົດທີ່ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ຕຶກ 100) ອອກເດີນທາງໄປພັກຢູ່ ແຂວງ ສະຫວັນນະເຂດ	ກປສສ 021 264921 ທ. ລິດສະໝອນ 020 56595351
ມື້ທີ 02: ວັນ ພະຫັດ, ວັນທີ 10/08/2015		
08:00-10:00	• ເດີນທາງໄປໂຮງງານ	ທີມງານສຸນກາງ, ແຂວງ, ເມືອງ ແລະ ບໍລິສັດ
10:00-1 1:00	• ຮັບຟັງການຍງານໂດຍຫຍໍ້ ກ່ຽວກັບ ບັນຫາການຮົ່ວໄຫຼຂອງນ້ຳຢາອາຊິດຊຸນຟູລິກ.	
11:00-12:00	• ລົງກວດກາໂຮງງານ; • ຂະບວນການຜະລິດ; • ການເກັບມ້ຽນວັດຖຸດິບ; • ສະຖານທີ່ຖິ້ມຂີ້ເຫຍື້ອ; • ອ່າງບຳບັດນ້ຳເສຍ; • ສາງເກັບມ້ຽນມາດ; • ວັດແທກຄຸນນະພາບນ້ຳ 2 ຈຸດ (ນອກເຂດ ແລະ ໃນເຂດໂຮງງານ).	
12:00-13:00	ພັກທ່ຽງ	
13:00-14:00	• ລົງພົບປະກັບປະຊາຊົນ ເພື່ອເກັບກຳຂໍ້ມູນ ແລະ ສຳພາດປະຊາຊົນ	ທີມງານສຸນກາງ, ແຂວງ, ເມືອງ ແລະ ບໍລິສັດ
14:00-16:00	• ປະຊຸມປຶກສາຫາລື ແລະ ສ້າງບົດບັນທຶກຮ່ວມກັນ	ທີມງານສຸນກາງ, ແຂວງ, ເມືອງ ແລະ ບໍລິສັດ
ມື້ທີ 03 ວັນສຸກ, ວັນທີ 11/08/2017		
08:00	ເດີນທາງກັບ ນະຄອນຫຼວງວຽງຈັນ	

ຕາຕະລາງ ລົງຕິດຕາມກວດກາ ການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ
ໂຮງງານ ຜະລິດອາຊິດຊຸນຟຸລິກ ຢູ່ບ້ານເລົ່າຫຼວງ, ເມືອງພະລານໄຊ, ແຂວງສະຫວັນນະເຂດ
ຂອງບໍລິສັດ ລາວມີໄຊ ຈຳກັດ ຈຳກັດ ໃນວັນທີ ०१ /08/2017

❖ <u>ພາກສ່ວນ ກປສສ.</u>

ລ/ດ NO.	ຊື່ ແລະ ນາມສະກຸນ Name and surname		ພາກສ່ວນ Organization	ຕຳແໜ່ງ Position	ເບີໂທ Telephone	ລາຍເຊັນ Signature
1.	ທ່ານ ພຸວົງ ຫຼວງໄຊຊະນະ		ກປສສ	ຫົວໜ້າ ກປສສ	020 22214122	
2.	ທ່ານ ນ. ພັກກາວັນ ພິດສະໄໝ		ກປສສ	ຮອງ ຫົວໜ້າ ກປສສ	020 2228763	
3.	ທ່ານ ນ. ເພັດສະໝອນ ອິນໄພຍະລາດ		ພຄຕ, ກປສສ	ຮອງຫົວໜ້າ ພຄຕ	020 55489964	
4.	ທ່ານ ໂສມະນັດ ອາດຜາສຸກ		ພບຜ, ກປສສ	ຮອງຫົວໜ້າ ພບຜ	020 22888654	
5.	ທ່ານ ລິດສະໝອນ ເພັງຄຳຮັກ		ພຄຕ, ກປສສ	ວິຊາການ	020 56595351	
6.	ທ່ານ ແອງພອນ ດວງບຸນທຳ		ພຄຕ, ກປສສ	ວິຊາການ	020 99666876	
7.	ທ່ານ ນາງ ແດງ ລັດທະຈັກ		ພຄຕ, ກປສສ	ວິຊາການ	020 99665559	
8.	ທ່ານ ນ. ວິໄລທອງ ສົມບັດດວງ		ພບຜ, ກປສສ	ວິຊາການ	020 22246677	

PDF Compressor Free Version

❖ ພາກສ່ວນຂະແໜງການທີ່ກ່ຽວຂ້ອງ

ລ/ດ NO.	ຊື່ ແລະ ນາມສະກຸນ Name and surname	ພາກສ່ວນ Organization	ຕຳແໜ່ງ Position	ເບີໂທ Telephone	ລາຍເຊັນ Signature
1	ທ່ານ ໄຊຍາສັກ ພູມີໄຊ	ກົມກວດກາ (ກຊສ)	ວິຊາການ	020 55411442	
2	ທ່ານ ທິລະກອນ ສີສຸພັນ	ສະຖາບັນຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ)	ວິຊາການ	020 999622241	
3	ທ່ານ ວໍລະວຊ ຈຍ່ງແຕ້ວ	ສະຖາບັນຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ)	ວິຊາການ	020 58966989	
4	ທ່ານ ຕຸ້ຍສີ ຄຳມະນີໂຄດ	ກົມຄວບຄຸມມົນລະພິດ (ກຊສ)	ວິຊາການ	020 99775384	
5	ທ່ານ ວິລະກອນ ໜູໃຄຢ່າງກົງຈີ	ກົມອຸດສາຫະກຳ ແລະ ຫັດຖະກຳ (ກະຊວງ ອຸດສາຫະກຳ ແລະ ການຄ້າ)	ວິຊາການ	020 56661159	

PDF Compressor Free Version

❖ <u>ພາກສ່ວນພະແນກ ຊສ ແຂວງສະຫວັນນະເຂດ</u>

ລ/ດ NO.	ຊື່ ແລະ ນາມສະກຸນ Name and surname	ພາກສ່ວນ Organization	ຕຳແໜ່ງ Position	ເບີໂທ Telephone	ລາຍເຊັນ Signature
1	ທ່ານ ນ.ສອນລະ ທັງສີນທິລາ	ພຊສ. ສຂ	ຮອງຫົວໜ້າພະແນກ	95372662	
2	ທ່ານ ນ. ສຸດໃຈ ສີດທິໄຫ	—ll—	ວິຊາການ	97375788	
3	ທ່ານ ນ. ທັດສະດາພອນ ຈັນທະລາ	ຫ້ອງການ ແຂວງ	ວິຊາການ	78912499	
4	ທ່ານ ໂອ່ສະຫວັນ ສີນທະປັນຍາ	ພຊສ. ສຂ.	ວິຊາການ	030554926O	
5	ທ່ານ				
6	ທ່ານ				
7	ທ່ານ				
8	ທ່ານ				
9	ທ່ານ				

PDF Compressor Free Version

PDF Compressor Free Version

❖ ພາກສ່ວນຫ້ອງການ ຊສ ເມືອງພະລານໄຊ

ລ/ດ NO.	ຊື່ ແລະ ນາມສະກຸນ Name and surname	ພາກສ່ວນ Organization	ຕໍາແໜ່ງ Position	ເບີໂທ Telephone	ລາຍເຊັນ Signature
1	ທ່ານ ສຸພານພອນ [illegible]	[illegible]	ຫົວໜ້າ ໜ່ວຍ [illegible]	55457978	[signature]
2	ທ່ານ ພົງສະຫວັນ [illegible]	ສູນພະຍາກອນ	ຫົວໜ້າ ໜ່ວຍງານ [illegible]	96942249	[signature]
3	ທ່ານ [illegible]	[illegible]	[illegible]	28289293	[signature]
4	ທ່ານ [illegible]	[illegible]	[illegible]	95134687	[signature]
5	ທ່ານ				

❖ <u>ພາກສ່ວນ ບ້ານເລົ່າຫຼວງ</u>

ລ/ດ NO.	ຊື່ ແລະ ນາມສະກຸນ Name and surname	ພາກສ່ວນ Organization	ຕຳແໜ່ງ Position	ເບີໂທ Telephone	ລາຍເຊັ່ນ Signature
1	ທ່ານ	ບ.	ຮ ນາຍ ບ້ານ	030969 2909	
2	ທ່ານ		ຮ/ຊ	020 98513795	
3	ທ່ານ		ນາຍບ້ານ	020 99596884	
4	ທ່ານ		ຮ ນາຍ ບ້ານ	020 35756574	
5	ທ່ານ		ຮ/ຊ	98483329	

ສໍາເນົາ ໃຊ້ສໍາເນົາ ປ ຕ ສ ກຸ້ມ 04. ໝາຍ 5 ຂຂ 907

❖ ພາກສ່ວນ ບໍລິສັດ ລາວມີໄຊ ຈຳກັດ

ລ/ດ NO.	ຊື່ ແລະ ນາມສະກຸນ Name and surname	ພາກສ່ວນ Organization	ຕຳແໜ່ງ Position	ເບີໂທ Telephone	ລາຍເຊັນ Signature
1	ທ່ານ	LMS			
2	ທ່ານ	LMS			
3	ທ່ານ				
4	ທ່ານ	LMS			
5	ທ່ານ				
6	ທ່ານ				
7	ທ່ານ				
8	ທ່ານ				

ທີ່ສະຫວັນນະເຂດ, ວັນທີ ສິງຫາ 2017

ຜູ້ບັນທຶກ

PDF Compressor Free Version

PDF Compressor Free Version

Checklist ການຕິດຕາມກວດກາ ໂຮງງານຜະລິດນ້ຳຢາ ອາຊິດຊຸນຟູລິກ ທີ່ເມືອງພະລານໄຊ, ແຂວງສະຫວັນນະເຂດ ຂອງບໍລິສັດ ລາວມີໄຊ ຈຳກັດ

- ຊື່ ແລະ ນາມສະກຸນ ຂອງຜູ້ລົງຕິດຕາມກວດກາ : ທ. ສົກສະຫວອນ ແພງພັນທັກ
- ວັນທີ : 7/08/2017
- ເວລາ : 09:00
- ໃຫ້ໝາຍ ✓ ຫຼື ×

I. ບັນດາມາດຕະການປ້ອງກັນການແກ້ໄຂ ແລະ ຫຼຸດຜ່ອນຜົນກະທົບທີ່ກຳນົດໄວ້ໃນ ESMMP.

ລ/ດ	ບັນດາກິດຈະກຳສຳຄັນໃນແຕ່ລະໄລຍະຂອງການພັດທະນາໂຄງການ	ຜົນກະທົບທີ່ອາດຈະເກີດຂຶ້ນ	ມາດຕະການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມແລະທຳມະຊາດ	ພາກສ່ວນຮັບຜິດຊອບ	ສະພາບການຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນຜົນກະທົບ		
					ໄດ້ປະຕິບັດ	ບໍ່ໄດ້ປະຕິບັດ	ຕີລາຄາຄວາມຄືບໜ້າ
	1. ດ້ານສິ່ງແວດລ້ອມ						
1.1	ສະພາບອາກາດ	- ການສັງເຄາະຂອງທາດຊຸນເຟີໄດອ່ອກໄຊ ແລະ ອາຊິດມິດສ(ມີ 3 ກ໋ລະນິຄີ) 1. ມົນລະພິດຂອງອາຊິດມິດສ ເຊິ່ງອາດມາຈາການຜະລິດນ້ຳຢາເຄມີ ອາຊິດຊຸນຟູລິກ 2. ມົນລະພິດທາງຊຸນເຟີ	- ນຳໃຊ້ເຄື່ອງວັດແທກຄຸນນະພາບອາກາດ - ຕິດຕັ້ງລະບົບດູດຊຶມ/ເກັບກັກມົນລະພິດຕໍ່ຢູ່ຈຸດທ້າຍຂອງທໍ່ສິ່ງຂ້ອນຂອງໂຮງງານ ເພື່ອປ້ອງກັນ; - So2 ບໍ່ໃຫ້ເກີນ 32.4 g/s - ອາຊິດມິດສ ບໍ່ໃຫ້ເກີນ 1.22 g/s (100% operation)< 0.49 g/s (40% operation)	ບໍລິສັດ	✓		- ໄດ້ມີການກວດກາ ຄຸນນະພາບອາກາດ ຢ່າງຕໍ່ເນື່ອງ - ໃນໄລຍະທຳມະ ຍັງບໍ່ເຫັນ ອາຍແກ໊ສ So2 ຂອງສູ່ອາກາດ ແຕ່ຈະປະກົດເຫັນ ໃນ.

		ໄດອ່ອກໄຊ ເຊິ່ງອາດມາ ຈາກການຜະລິດນ້ຳຢາເຄມີ ອາຊິດຊຸນຟຸລິກ 3. ມີນລະພິດທາງຊຸນເຟີ ໄດອ່ອກໄຊ ເຊິ່ງອາດມາ ຈາກສະພາບອ້ອມຂ້າງຂອງ ໂຮງງານຜະລິດນ້ຳຢາເຄມີ ອາຊິດຊຸນຟຸລິກ	- ຕິດຕັ້ງອຸປະກອນກວດທາດ So3 ແລະ ທາດອາຊິດມີດສ ເຊິ່ງເຈື່ອປົນຢູ່ນຳພະ ລິດຕະພັນ ແລະ ຕ້ອງມີການກວດກາທຸກ ເດືອນ. (ຈຸດສຸດທ້າຍຂອງທໍ່ສົ່ງໂຮງງານ; 4 ຈຸດແຄມຮົ້ວຂອງໂຮງງານ; 2 ຈຸດຢູ່ ເຂດຊຸມຊົນໃກ້ຄ່ຽງ)				
1.2	**ສະພາບແຫຼ່ງນ້ຳ**	- ເຮັດໃຫ້ຄຸນນະພາບນ້ຳມີ ການປ່ຽນແປງ; - ການຮົ່ວໄຫຼຂອງນ້ຳມັນ ເຄື່ອງ ແລະ ສານເຄມີ ແລະ ອື່ນໆ;	- ສ້າງອ່າງດັກຕະກອນເພື່ອຮັບຮອງນ້ຳອອກ ຈາກໂຮງງານລົງສູ້ແຫຼ່ງນ້ຳທຳມະຊາດ. - ມີການບຳລຸງຮັກສາຍານພາຫະນະ ແລະ ອຸປະກອນເປັນປົກກະຕິ; - ມີສາງເກັບມ້ຽນ ແລະ ມີສະຖານທີ່ຖິ້ມ ສະເພາະສຳລັບສານເຄມີທີ່ເປນ ອັນຕະລາຍ. (ຈຸດປ່ອຍນ້ຳອອກຈາກ ໂຮງງານກ່ອນປ່ອຍສູ້ສາຍນ້ຳທຳມະຊາດ)		✓		- ມີການກວດກາ ຄຸນ ຄ້ຳ ຄຸນ ມະພາບນ້ຳ ອາທິດ ຫຼຕໍ່ຄັ້ງ. - ອຸເກັບນ້ຳ ຄວນສ້ຳ ໃຫ້ເປັນ ລະບົບ ທຳບັດນ້ຳ
1.3	**ສຽງ**	- ສິ່ງສຽງລົບກວນຊຸມຊົນ ອ້ອມຂ້າງໂຮງງານ ເນື່ອງ ຈາກເຄື່ອວຈັກປ້ຳລົມ ແລະ ເຄື່ອງຈັກພະລິດ ພະລັງງານໄຟຟ້າ ບັນທຸກ ແລະ ພາຫະນະຕ່າງໆ;	- ມີເຄື່ອງວັດແທກທີ່ເກີດຈາກເຄື່ອງຈັກ-ອຸປະກອນຕ່າງໆຢູ່ໃນໂຮງງານ, ມີການ ຕິດຕາມກວດກາ ແລະ ສ້ອມແປງ ອຸປະກອນ, ມີການແຈ້ງເຕືອນໃຫ້ ປະຊາຊົນໃນເຂດໂຮງງານຮັບຊາບ ແລະ ພະນັກງານຕ້ອງມີເຄື່ອງອັດໃນເວລາຈັດຕັ້ງ ປະຕິບັດໜ້າວຽກ, ສ້າງກຳແພງອ້ອມຈອດ ໂຮງງນ; (ຂອບຮົ້ວທິດເໜືອ, ຂອບ ເສັ້ນທາງ ເລກ 09, ຂອບຮົ້ວທາງທິດທາງ ຕາເວັນຕົກ)		✓		

PDF Compressor Free Version

1.4	**ສິ່ເສດເຫຼືອທົ່ວໄປ ແລະ ສິ່ເສດເຫຼືອທີ່ເປັນອັນຕະລາຍ**	- ມົນລະພິດຕໍ່ສຸຂະພາບ ແລະ ຄວາມປອດໄພ	- ສິ່ງເສດເຫຼືອທົ່ວໄປແມ່ນຈະຖິ້ມຢູ່ສະຖານຖິ້ມຂີ້ເຫຍື້ອ; - ສ່ວນສິ່ເສດເຫຼືອທີ່ເປັນອັນຕະລາຍ ປະເພດສານເຄມີແມ່ນຈະມີຖັງບຳບັດສະເພາະ; - ສິ່ງເສດເຫຼືອທີ່ນຳໃຊ້ຄືນໃໝ່ໄດ້ແມ່ນຂາຍໃຫ້ບໍລິສັດຮັບເໝົາ; - ພະນັກງານເກັບມ້ຽນທາດເຄມີຕ້ອງມີຊຸດເຄື່ອງນຸ່ງປົກປິດຮ່າງກາຍ ແລະ ມີອຸປະກອນປ້ອງກັນຈາກທາດເຍື່ອເຄມີ.		✓		- ... ...

II. ບັນດາມາດຕະການປ້ອງກັນການແກ້ໄຂ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ແລະ ຂໍ້ແນະນຳຕາມບົດບັນທຶກ ຄັ້ງວັນທີ 09 ກັນຍາ 2015

ລ/ດ	ບັນຫາຜົນກະທົບ	ຂໍ້ສະເໜີແນະ	ໄດ້ປະຕິບັດ	ບໍ່ໄດ້ປະຕິບັດ	ຕີລາຄາຄວາມຄືບໜ້າ
1	ບາງຄັ້ງໃນເວລາເລີ່ມເປີດເຄື່ອງຈັກ ເຮັດໃຫ້ອາຍ SO2 ອອກສູ່ອາກາດ ແລະ ບວກກັບຝົນຕົກ ຈຶ່ງເຮັດໃຫ້ອຸນຫະພູມຫຼຸດລົງ ແລະ ມີລົມອຸ້ມ ເອົາທາດ SO2 ລົງມາໃສ່ຕົ້ນໄມ້ ແລະ ທົ່ງນາຂອງປະຊາຊົນ.	– ບໍລິສັດ ຕ້ອງປັບປຸງລະບົບການຜະລິດຂອງເຄື່ອງຈັກໃຫ້ໄດ້ມາດຕະຖານ ບໍ່ໃຫ້ເກີດບັນຫາໃນການເປີດເຄື່ອງຈັກ ແລະ ເຮັດໃຫ້ມີສານ SO2 ອອກສູ່ພາຍນອກ ສົ່ງຜົນກະທົບຕໍ່ປະຊາຊົນອີກ;	✓		ໄດ້ປັບປຸງລະບົບເຄື່ອງຈັກ ແລ້ວ ຍັງເກີດ ບັນຫາ ອາຍ ແກ້ສ ຮ້ວ ອອກສູ່ອາກາດ
		– ຖ້າຫາກເກີດມີບັນຫາອີກໃນຕໍ່ໜ້າບໍລິສັດ ຕ້ອງໄດ້ປິດ ໂຮງງານຊົ່ວຄາວ ເພື່ອປັບປຸງລະບົບການຜະລິດໃຫ້ໄດ້ມາດຕະຖານ ແລະ ຮັບປະກັນບໍ່ໃຫ້ເກີດບັນຫາອີກໃນຕໍ່ໜ້າ;			
		– ກ່ອນຈະເປີດເຄື່ອງຈັກຜະລິດອາຊິດຊຸນຟູລິກ ຕ້ອງແຈ້ງການໃຫ້ຂະແໜງການທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ປະຊາຊົນຮັບຊາບ;			
		– ບໍລິສັດ ຝຶກອົບຮົມ ກ່ຽວກັບ ການນຳໃຊ້ເຄື່ອງວັດແທກ ອາກາດ ໃຫ້ພະນັກງານຫ້ອງການ ຊສ ເມືອງ ເພື່ອ ຕິດຕາມກວດກາປະຈຳເດືອນ;	✓		
		– ສະເໜີໃຫ້ບໍລິສັດ ພິຈາລະນາ ປັບປຸງສາງເກັບມ້ຽນມາດ ແລະ ໂຮງເຕົາເຜົາມາດ ໃຫ້ໄດ້ມາດຕະຖານ;	✓		ບໍລິສັດ ໄດ້ປັບປຸງ ເຕັ້ງ ຫຼອນ ມາດ ຖົດຍການ ໃຊ້ລະ ບັບ ປິດ ແຕ່ຍັງມີ ຂ້ອ
		– ໃຫ້ບໍລິສັດ ເອົາຕົວຢ່າງດິນ ແລະ ນ້ຳ ໃນເຂດບ້ານແກ້ງ ຫຼວງ ໄປວິໄຈ ແລະ ແຈ້ງຜົນການວິໄຈດັ່ງກ່າວໃຫ້ ຂະແໜງການທີ່ກ່ຽວຂ້ອງ ແລະ ປະຊາຊົນຮັບຊາບ;		✓	

PDF Compressor Free Version

		– ໃຫ້ບໍລິສັດ ລາຍງານຜົນກວດກາ ສຸຂະພາບຂອງ ປະຊາຊົນໃນຂອບເຂດໂຮງງານ;			
		– ກໍລະນີ ມີເຫດການສຸກເສີນເກີດຂຶ້ນ ບໍລິສັດ ຕ້ອງລາຍ ງານສະພາບ ແລະ ບັນຫາທີ່ເກີດຂຶ້ນ ໃຫ້ ກຊສ ພະແນກ ຊສ ແຂວງ ສະຫວັນນະເຂດ, ຫ້ອງການ ຊສ ເມືອງ ແລະ ຫ້ອງການ ອຸດສາຫະກຳ ແລະ ຫັດຖະກຳ ເມືອງພະລານໄຊ ຮັບຊາບພາຍໃນ 24 ຊົ່ວໂມງ;			
		– ໃຫ້ບໍລິສັດ ສົມທົບຫ້ອງການ ຊສ ເມືອງ ແລະ ຂະແໜ ງການກ່ຽວຂ້ອງ ລົງເກັບກຳຂໍ້ມູນຜູ້ທີ່ຖືກຜົນກະທົບ ແລະ ຊົດເຊີຍຕາມຄວາມເໝາະສົມ;	✓		ໃຫ້ສົມທົບ ຊຸດ ເກັບ ຕາມ ຄວາມ ເໝາະ: ສົມ ຄົດຄ່ານ ຄົນ ຄົນ ຂະແໜ ແຕ່ ກໍ.
		– ໃຫ້ບໍລິສັດ ເອົາໃຈໃສ່ເພີ່ມເຕີມ ໃນການປະສານງານກັບ ພາກສ່ວນທີ່ກ່ຽວຂ້ອງ ຂັ້ນທ້ອງຖິ່ນເປັນຕົ້ນ: ພະແນກ ຊສ ແຂວງ ສະຫວັນນະເຂດ ແລະ ຫ້ອງການ ຊສ ເມືອງພະລານໄຊ.	✓		

ຄຳເຫັນຕໍ່ກັບຜົນການລົງຕິດຕາມກວດກາ:

ໃຫ້ ບໍລິສັດ ສືບຕໍ່ ປະ ປ ລະ ເບັ ເຄື່ ຄົ ແລະ ເຕົ ຫຼຸ ມ ມ ໃ ໃ ໂ ມ ຄ ຖ ແ ຄ ດ ມ ແ ອ ເ ເ ເ

PDF Compressor Free Version

ບົດສັງລວມຫຍໍ້

ກ່ຽວກັບ ຂໍ້ມູນ ແລະ ສະພາບການຈັດຕັ້ງປະຕິບັດໂຮງງານຜະລິດນ້ຳຢາ ອາຊິດຊູນຟູລິກ ທີ່ເມືອງພະລານໄຊ, ແຂວງສະຫວັນນະເຂດ ຂອງບໍລິສັດ ລາວມີໄຊ ຈຳກັດ

1.	**ຂໍ້ມູນທົ່ວໄປກ່ຽວກັບໂຄງການ**	
1.1	**ຊື່ໂຄງການ:** ໂຮງງານຜະລິດນ້ຳຢາ ອາຊິດຊູນຟູລິກ ທີ່ເມືອງພະລານໄຊ, ແຂວງ ສະຫວັນນະເຂດ ຂອງບໍລິສັດ ລາວມີໄຊ ຈຳກັດ	**ປະເພດໂຄງການ:**
1.2	**ທີ່ຢູ່ໂຄງການ:** ບ້ານເຫຼົ່າຫຼວງ, ເມືອງພະລານໄຊ, ແຂວງສະຫວັນນະເຂດ	**ໂທລະສັບ:**
1.3	**ເຈົ້າຂອງໂຄງການ:** ບໍລິສັດ ລາວມີໄຊ ຈຳກັດ	
1.4	**ໃບທະບຽນວິສາຫະກິດ/ໃບທະບຽນສຳປະທານເລກ ທີ:**.....	
1.5	**ໄລຍະເວລາການລົງທຶນ/ໄລຍະເວລາສຳປະທານ:** 15 ປີ	
1.6	**ເນື້ອທີ່ສຳປະທານ :** 12 ເຮັກຕາ	
1.7	**ໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ ຮັບຮອງ ແຜນການຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ**	ວັນທີ:**30/08/2011** ເລກທີ:**501/ກຊສ** ນຳໃຊ້ເຖິງວັນທີ:
1.8	ສັນຍາສຳປະທານ (ຖ້າມີ)	ວັນທີ່ລົງ ນາມ:..... ວັນທີ່ສັນຍາມີຜົນ ສັກສິດ:.....
1.9	**ຄວາມສາມາດໃນການຜະລິດສູງສຸດ:** 42,000-44,000 ໂຕນ/ປີ	
1.10	**ສະພາບການດຳເນີນໂຄງການໃນປະຈຸບັນ:** ໄລຍະດຳເນີນງານ	
1.11	**ມູນຄ່າການລົງທຶນ :** 5,500,000ໂດລາສະຫະລັດ	
2.	**ເງື່ອນໄຂທີ່ສຳຄັນ ຕາມເອກະສານຜູກພັນຕ່າງໆ ຕໍ່ ເຈົ້າຂອງໂຄງການ**	
2.1	**ບັນດາເງື່ອນໄຂທີ່ກຳນົດໄວ້ໃນໃບຢັ້ງຢືນ ກ່ຽວກັບ ສິ່ງແວດລ້ອມ (ESMMP):**	
2.2	**ບັນດາພັນທະດ້ານສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ ທີ່ກຳນົດໄວ້ໃນ ແຜນການຄຸ້ມຄອງ ແລະ ຕິດຕາມ ກວດກາສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ:** ❖ <u>ງົບປະມານດ້ານສິ່ງແວດລ້ອມ:</u> 1. ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ 1.800 US$ (1ຄັ້ງ/ປີ). 2. ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ 900 US$ (4ຄັ້ງ/ປີ). 3. ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ 600 US$ (12ຄັ້ງ/ປີ). 4. ຊື້ອຸປະກອນຮັບໃຊ້ການລົງຕິດຕາມກວດກາ 150 US$	

PDF Compressor Free Version

	5. ແຮສຸກເສີນ 500 US$ ❖ <u>ງົບປະມານດ້ານສັງຄົມ :</u> 1. ພັດທະນາວຽກງານການສຶກສາ 5.000 2011-2015 2. ພັດທະນາວຽກງານສາທາລະນະສຸກ 5.000 2016-2020 3. ພັດທະນາວຽກງານຄົມມະນາຄົມ 5.000 2021-2025
2.3	**ຄວາມຄືບໜ້າຂອງໂຄງການໃນໄລຍະທີ່ຜ່ານມາ:**
	1) <u>ບັນຫາຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ :</u> - ບາງຄັ້ງໃນເວລາເລີ່ມເປີດເຄື່ອງຈັກເຮັດໃຫ້ອາຍ SO2 ອອກສູ່ອາກາດ ແລະ ບວກກັບຝົນຕົກ ຈຶ່ງເຮັດໃຫ້ອຸນຫະພູມຫຼຸດລົງ ແລະ ມີລົມອຸ້ມເອົາທາດ SO2 ລົງມາໃສ່ຕົ້ນໄມ້ ແລະ ທົ່ງນາຂອງປະຊາຊົນ.

I. **ປະຫວັດຄວາມເປັນມາຂອງໂຄງການ.**

ໂຄງການກໍ່ສ້າງໂຮງງານຜະລິດອາຊິດຊູນຟູລິກ ຕັ້ງຢູ່ບ້ານເຫຼົ່າຫຼວງ, ເມືອງພະລານໄຊ, ແຂວງສະ ຫວັນນະເຂດ ຂອງບໍລິສັດ ລາວມີໄຊ ຈຳກັດ ຫ່າງຈາກເທດສະບານ ເມືອງພະລານໄຊ ປະມານ 10 ກມ, ຫ່າງຈາກເທດສະບານ ແຂວງ ສະຫວັນນະເຂດ ປະມານ 105 ກມ ແລະ ຫ່າງຈາກເສັ້ນທາງເລກ 9 ປະມານ 50 ມ, ໂຄງການດັ່ງກ່າວ ແມ່ນການ ລົງທຶນໃນຮູບແບບວິສາຫະກິດປະສົມ ລະຫວ່າງ ນັກທຸລະກິດຄົນລາວໂດຍແມ່ນ ທ່ານ ປະກາຍສິດ ອະໄພຍະສານ ຖື ຫຸ້ນ 5% ແລະ ນັກທຸລະກິດຄົນໄທ ໂດຍແມ່ນ ທ່ານ ກຽດຕິໄຊ ມົນເສຣິນຸສອນ ຖືຫຸ້ນ 95%. ຈຸດປະສົງຂອງໂຮງງານ ແມ່ນຜະລິດນ້ຳຢາເຄມີ ອາຊິດຊູນຟູລິກ, ປຸຍເຄມີ ແລະ ສານສົ້ມ ເພື່ອສະໜອງໃຫ້ແກ່ໂຄງການຂຸດຄົ້ນຄຳ-ທອງ ເຊໂປນ ຂະບວນການຜະລິດ ແມ່ນຈະນຳເອົາສານມາດແຫ້ງມາເຜົາໄໝ້, ປ່ຽນແປງທາດຊູນຟີໄດອ໋ອກໄຊ ແລະ ການດູດຊຶມ ຂອງທາດ SO3, ຜົນຜະ ລິດອາຊິດຊູນຟູລິກ ຂອງໂຮງງານ ມີປະມານ 42,00044,000 ໂຕນ/ປີ, ມີກຳລັງການ ຜະລິດ 130 ໂຕນຕໍ່ມື້, ການນຳໃຊ້ນ້ຳ (ນ້ຳບາດານ) ປະມານ 102 ມ3/ມື້, ມີເນື້ອທີ່ສຳປະທານ 12 ຮຕ, ມູນຄ່າການ ລົງທຶນ ທັງໝົດ 5,500,000 ໂດລາ, ໃນນັ້ນ ທຶນຈົດທະບຽນ 1,600,560 ໂດລາ, ມີອາຍຸການດຳເນີນງານ 15 ປີ.

II. **ລາຍລະອຽດ ກ່ຽວກັບໂຄງການ.**

➢ ການນຳໃຊ້ເນື້ອທີ່: ໃນເນື້ອທີ່ ຈຳນວນ 12 ຮຕ ແບ່ງອອກເປັນ 5 ເຂດ ຄື:

1. ເຂດໂຮງງານຜະລິດ ລວມມີ: ຫ້ອງການ, ເຕົາເຜົາທາດເຄມີ ແລະ ລະບົບສັງເຄາະທາດເຄມີ;
2. ເຂດສາງເກັບມ້ຽນວັດສະດຸ ແລະ ຜະລິດຕະພັນ;
3. ເຂດເຮືອນພັກ ພະນັກງານ;
4. ເຂດອ່າງເກັບນ້ຳ ຈາກທຳມະຊາດ ເພື່ອສະໜອງໃຫ້ແກ່ຂະບວນການຜະລິດ ໂຮງງານ ແລະ ອ່າງບຳບັດນ້ຳເສຍ;
5. ເຂດສີຂຽວ ເຊິ່ງທາງບໍລິສັດ ມີແຜນນຳໃຊ້ເນື້ອທີ່ຈຳນວນໜຶ່ງ ເພື່ອພັດທະນາເປັນພື້ນທີ່ສີ ຂຽວ;

➢ **ຂັ້ນຕອນ ແລະ ຂະບວນການຜະລິດ: ມີ 3 ຂັ້ນຕອນດັ່ງນີ້:**

1. ການເຜົາໄໝ້ຂອງທາດຊູນຟີ;
2. ການປ່ຽນແປງທາດຊູນຟີໄດອ໋ອກໄຊ;
3. ການດູດຊຶມຂອງທາດ SO3.

PDF Compressor Free Version

ໂຮງງານ ໄດ້ອອກແບບນຳໃຊ້ຂະບວນການຜະລິດ 2 ແບບ ຄື: ແບບການສັງເຄາະ ແລະ ແບບດູດຊຶມ 2 ຊັ້ນ (Double Conversion Double Absorption, DCDA) ໂດຍນຳໃຊ້ຊຸນເຟີ ທີ່ເປັນທາດແຫຼວ ຫຼື ທາດແຂງ ລິດ ນ້ຳຢາອາຊິດຊຸນຟຸລິກ ທີ່ມີຄວາມເຂັ້ມຂຸ້ນ 98.5% ຢູ່ໃນຂະບວນການດູດຊຶມ 2 ຊັ້ນ, ຂະບວນການດູດຊຶມທຳອິດ (Interpass Absorption Tower) ແມ່ນການກັ່ນຕອງທາດ SO3/SO2 ຂັ້ນພື້ນຖານ ກ່ອນທາດຊຸນເຟີ ຈະຜ່ານ ໄປເຖິງຂັ້ນຕອນກັ່ນຕອງສຸດທ້າຍ. ຂະບວນການດູດຊຶມທຳອິດ ມີບົດບາດສຳຄັນ ໃນການຊ່ວຍກັ່ນຕອງສ່ວນປະສົມ ຂອງທາດຕ່າງໆອອກໄປ ແລະ ເຮັດໃຫ້ການປະຕິກິລິຍາ ຂອງທາດ SO3/SO2 ຢູ່ໃນຂະບວນການສຸດທ້າຍຫຼຸດລົງ ເຊິ່ງ ເຮັດໃຫ້ການປ່ຽນແປງ ຫຼື ການກັ່ນຕອງທາດຊຸນເຟີນັ້ນງ່າຍຂຶ້ນ, ການນຳໃຊ້ນ້ຳ:ໃຊ້ນ້ຳບາດານ, ໄລຍະກໍ່ສ້າງ 19 ມ3/ມື້ ໄລຍະດຳເນີນການຜະລິດ ປະມານ 180 ມ3/ມື້.

III. **ສະພາບສິ່ງແວດລ້ອມ ແລະ ສັງຄົມ ເຂດໂຄງການ.**

1. **ສະພາບສິ່ງແວດລ້ອມ.**

➢ **ດ້ານກາຍະພາບ:**

ສະພາບອາກາດ: ເຂດໂຄງການນອນຢູ່ໃນເຂດທີ່ມີລົມມໍລະສຸມ ແລະ ມີ 2 ລະດູ, ລະດູຝົນເລີ່ມແຕ່ເດືອນ ພຶດສະພາ-ຕຸລາ, ກະແສລົມ ແມ່ນພັດມາຈາກທິດຕາເວັນອອກສ່ຽງເໜືອ, ຄວາມໄວສະເລ່ຍ 2.32.4 ມມ/ວິນາທີ ແລະ ລະດູແລ້ງ ເລີ່ມແຕ່ເດືອນພະຈິກ-ເມສາ, ກະແສລົມ ແມ່ນພັດມາຈາກທິດຕາເວັນຕົກສ່ຽງໃຕ້, ຄວາມໄວສະເລ່ຍ 0.92.11 ມມ/ວິນາທີ. ສະພາບອາກາດໂດຍລວມ ມີລັກສະນະຄ້າຍຄືກັບບັນດາແຂວງພາກກາງ. ອຸນຫະພູມສະເລ່ຍ 25.8 ອົງສາເຊ, ອຸນຫະ ພູມຕ່ຳສຸດ 21.8 ອົງສາເຊ ແລະ ສູງສຸດ 30.1 ອົງສາເຊ, ມີປະລິມານນ້ຳຝົນສະເລ່ຍ ປະມານ 1,539 ມມ/ປີ ແລະ ມີຄວາມຊຸ່ມ ສະເລ່ຍ ປະມານ 65%/ປີ.

ດິນ: ເຂດພື້ນທີ່ໂຄງການ ເປັນດິນປ່າໂຄ, ມີຫີນປະສົມຊາຍ ແລະ ເນສີນ້ຳຕານເຂັ້ມ. ຊັ້ນໜ້າດິນ ທີ່ເປັນ ສີນ້ຳຕານເຂັ້ມ ມີຄວາມໜາ ປະມານ 1020 Cm, ມີຄ່າຄວາມເປັນກົດ pH=3.55 ເປັນດິນຄຸນນະພາບຕ່ຳ ແລະ ບໍ່ເໝາະສົມປູກເຂົ້າ ຫຼື ພຶດລົ້ມລຸກ. ນອກນັ້ນ, ພື້ນທີ່ດັ່ງກ່າວ ຍັງເປັນເຂດ ທີ່ມີລະເບີດຍັງບໍ່ທັນແຕກ ເປັນຈຳນວນຫຼາຍ ໃນ ສະໄໝສົງຄາມ.

ຊັບພະຍາແຫຼ່ງນ້ຳ: ພື້ນທີ່ໃກ້ຄຽງໂຄງການ ແມ່ນບໍ່ມີຫ້ວຍນ້ຳລຳເຊໄຫຼຜ່ານ ແລະ ລະດັບຄວາມເລິກຂອງແຫຼ່ງ ນ້ຳໃຕ້ດິນ ແມ່ນຂຶ້ນກັບລະດູການ ແລະ ພົບເຫັນໃນລະຫວ່າງ 5070 ມ (ລະດູຝົນ) ແລະ 100 ມ ຂຶ້ນໄປ (ລະດູແລ້ງ).

➢ **ດ້ານຊີວະພາບ:**

ສະພາບປ່າໄມ້: ພື້ນທີ່ໂຄງການສ່ວນຫຼາຍເປັນປ່າໂຄກ ແລະ ປ່າເລົ່າຊຸດໂຊມ, ບໍ່ມີຕົ້ນໄມ້ໃຫຍ່, ບໍ່ມີຕົ້ນໄມ້ຫວງ ຫ້າມ ແລະ ບໍ່ເປັນໄມ້ທີ່ມີຄ່າທາງດ້ານເສດຖະກິດ. ໄມ້ສ່ວນຫຼາຍແມ່ນໄມ້ກໍ່, ໄມ້ຕໍ່ວ, ໄມ້ກອກ ແລະ ໄມ້ສະອາມ.

ສະພາບພືດພັນ: ພືດພັນຢູ່ບໍລິເວນພື້ນທີ່ໂຄງການ ສ່ວນຫຼາຍແມ່ນເຂືອໜາມ, ໄມ້ຕົ້ວ ແລະ ໄມ້ປະສົມອື່ນໆ, ສ່ວນຫຼາຍແມ່ນບໍ່ມີລາຄາທາງດ້ານເສດຖະກິດ ແລະ ບໍ່ສາມາດບໍລິໂພກໄດ້.

ສັດປ່າ: ເຂດພື້ນທີ່ໂຄງການ ເປັນປ່າໂຄກ, ປ່າເລົ່າເຊື່ອມໂຊມ ແລະ ບໍ່ມີຫ້ວຍນ້ຳລຳເຊາໄຫຼຜ່ານ, ສະນັ້ນ ຂໍ້ມູນ ກ່ຽວກັບ ສັດນ້ຳ, ສັດປ່າຫວງຫ້າມ ໃນລັດສະໝີ 5 ກມ ຈຶ່ງບໍ່ພົບເຫັນ, ແຕ່ວ່າການສຳຫຼວດຕົວຈິງ ໄດ້ພົບເຫັນສັດປົກ ຈຳນວນໜຶ່ງ ເຊັ່ນ: ນົກ, ໜູ, ກະຮອກ ແລະ ສັດເລືອຄານ (ງູ ແລະ ແລນ) ແລະ ປະເພດແມງໄມ້ ມີ: ຈິ້ຫຼ່ຳ, ຕັກກະແຕນ ແລະ ແມງໄມ້ຊະນິດຕ່າງໆ.

2. **ສະພາບເສດຖະກິດ-ສັງຄົມ:**

ການຄົມມະນາຄົມ: ເມືອງພະລານໄຊ ເປັນເມືອງໜຶ່ງທີ່ມີເສັ້ນທາງ ເລກ 9 ຕັດຜ່ານ ເຊິ່ງເປັນເງື່ອນໄຂອຳນວຍ ຄວາມສະດວກ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ແລະ ວັດທະນາທຳ ແລະ ເຂດພື້ນທີ່ໂຄງການ ຫ່າງຈາກ ເສັ້ນທາງເລກ 9 ປະມານ 50 ມ;

PDF Compressor Free Version

ຄວາມໜາແໜ້ນຂອງປະຊາກອນ: ອີງໃສ່ຂໍ້ມູນ ຈາກອົງການປົກຄອງເມືອງພະລານໄຊ ໃນທ້າຍປີ 2010 ມີ 54 ບ້ານ, 5,345 ຄອບຄົວ, ປະຊາກອນທັງໝົດ 34,977 ຄົນ, ຍິງ 17,714 ຄົນ ແລະ ເມືອງພະລານໄຊ ໄດ້ຈັດສັນໃຫ້ມີ 9 ກຸ່ມບ້ານພັດທະນາ ແລະ 2 ຈຸດສຸມ;

ການດຳລົງຊີວິດ: ການດຳລົງຊີວິດ ຂອງປະຊາຊົນ ຍັງມີຄວາມທຸກຍາກລາບາກ, ປະຊາຊົນສ່ວນຫຼາຍມີອາຊີບ ເຮັດໄຮ່ ແລະ ເຮັດສວນ, ໃນສົກປີ 2009-2010 ປະຊາຊົນເມືອງພະລານໄຊ ມີລາຍຮັບສະເລ່ຍ ປະມານ 600 ໂດລາ ສະຫະລັດ/ຄົນ/ປີ;

ວຽກງານສາທາລະນະສຸກ: ປະຈຸບັນທົ່ວເມືອງພະລານໄຊ ມີສຸກສາລາ ພຽງແຕ່ 2 ແຫ່ງ ແລະ ມີໂຮງໝໍ 1 ແຫ່ງ ເຊິ່ງໃຫ້ບໍລິການຄົນເຈັບຍັງມີຂໍ້ຈຳກັດ. ພະຍາດສ່ວນຫຼາຍທີ່ເກີດຂຶ້ນ ມີ: ໄຂ້ຍຸງ, ໄຂ້ເລືອດອອກ ແລະ ພະຍາດ ຖອກທ້ອງ;

ວຽກງານການສຶກສາ: ໃນສົກປີ 2009-2010 ເມືອງພະລານໄຊ ມີໂຮງຮຽງລ້ຽງເດັກ-ອະນຸບານ 2 ແຫ່ງ, ມີ ນັກຮຽນ 196 ຄົນ, ຍິງ 103 ຄົນ; ໂຮງຮຽນປະຖົມ 64 ແຫ່ງ, ໃນນັ້ນໂຮງຮຽນປະຖົມສົມບູນ 24 ແຫ່ງ, ມີນັກຮຽນ 5,500 ຄົນ; ໂຮງຮຽນມັດທະຍົມຕອນຕົ້ນ 3 ແຫ່ງ, ມີນັກຮຽນ 725 ຄົນ, ຍິງ 342 ຄົນ ແລະ ໂຮງຮຽນມັດທະຍົມ ປາຍ 1 ແຫ່ງ, ມີນັກຮຽນ 166 ຄົນ, ຍິງ 73 ຄົນ;

ດ້ານວັດທະນະທຳ ແລະ ຊົນເຜົ່າ: ເມືອງພະລານໄຊ ປະກອບມີ 4 ຊົນເຜົ່າ ຄື: ເຜົ່າລາວ, ຜູ້ໄທເຜົ່າ ລ້ວຍ, ເຜົ່າກະຕາງ ແລະ ເຜົ່າມັງກອງ, ນັບຖືຊົນເຜົ່າ, ສາດສະໜາ ແລະ ມີພາສາປາກເວົ້າແຕກຕ່າງກັນ.

IV. ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມທີ່ອາດຈະເກີດຂຶ້ນ ໃນໄລຍະກໍ່ສ້າງແລະໄລຍະດຳເນີນໂຄງການ ແລະ ມາດ ຕະການແກ້ໄຂ.

1. ໄລຍະກໍ່ສ້າງ.

ຜົນກະທົບຕໍ່ອາກາດ: ໃນໄລຍະກໍ່ສ້າງ ຈະບໍ່ມີຜົນກະທົບຕໍ່ອາກາດ, ແຕ່ວ່າຄຸນນະພາບອາກາດ ຢູ່ບໍລິເວນເຂດທີ່ ມີການກໍ່ສ້າງ ຈາກການແຜ່ກະຈາຍຂອງຂີ້ຝຸ່ນ ເປັນບາງໄລຍະ ຍ້ອນການນຳໃຊ້ເຄື່ອງກົນຈັກໜັກ ໃນການປັບໜ້າດິນ ແລະ ການຄົມມະນາຄົມຂົນສົ່ງ ຂອງພາຫະນະ ເຂົ້າ-ອອກ ໃນເຂດໂຄງການ;

ຜົນກະທົບຕໍ່ແຫຼ່ງນ້ຳ: ຢູ່ບໍລິເວນພື້ນທີ່ໂຄງການ ສ່ວນຫຼາຍເປັນຫີນແຮ່ປະສົມດິນດານ ແລະ ບໍ່ມີຫ້ວຍນ້ຳໄຫຼ ຜ່ານ, ສະນັ້ນ ຜົນກະທົບຕໍ່ຫ້ວຍນ້ຳຈຶ່ງບໍ່ມີບັນຫາ ໃນໄລຍະກໍ່ສ້າງ, ນ້ຳເສຍຈຳນວນໜຶ່ງເຊິ່ງຄາດວ່າ ຈະເກີດຈາກການນຳ ໃຊ້ໃນເຮືອນພັກກຳມະກອນ;

ບັນຫາມົນລະພິດທາງສຽງ: ການປັບໜ້າດິນ ແລະ ການກໍ່ສ້າງອາຄານ ຂອງໂຮງງານ ອາດກໍ່ໃຫ້ເກີດມີສຽງລົບ ກວນບາງຄັ້ງຄາວ ທີ່ເກີດຈາກລົດຈັກ, ລົດດຸດ, ລົດກາວາດ ແລະ ລົດຢຽບດິນ ແລະ ສຽງດັ່ງກ່າວ ຈະບໍ່ສົ່ງຜົນກະທົບຕໍ່ ຊຸມຊົນ ແລະ ເຫດສະບານເມືອງພະລານໄຊ ເນື່ອງຈາກວ່າ ມີໄລຍະຫ່າງ ປະມານ 2 ກມ ແລະ 10 ກມ ຕາມລຳດັບ;

ບັນຫາສິ່ງເສດເຫຼືອ: ສິ່ງເສດເຫຼືອອາດຈະເກີດ ຈາກການກໍ່ສ້າງໂຮງງານ ປະກອບມີ: ເສດເຫຼັກ, ເສດໄມ້ ແລະ ພະສະດຸຫຸ້ມຫໍ່ອຸປະກອນຕ່າງໆ ປະມານ 0.69 ມ3/ມື້ ແລະ ຂີ້ເຫຍື້ອຈາກການນຳໃຊ້ໃນຊີວິດປະຈຳວັນ ຂອງ ກຳມະກອນ 0.82 ກລ/ມື້;

ຜົນກະທົບຕໍ່ການນຳໃຊ້ທີ່ດິນ: ເຂດພື້ນທີ່ຂອງໂຮງງານ ມີພຽງ 12 ຣຕ, ໃນນັ້ນ ພື້ນທີ່ປຸກສ້າງອາຄານ ທັງໝົດ 104.484 ມ2, ສະນັ້ນ ຜົນກະທົບຕໍ່ການນຳໃຊ້ດິນ ຈຶ່ງບໍ່ມີບັນຫາ;

ຜົນກະທົບຕໍ່ການນຳໃຊ້ນ້ຳ ແລະ ພະລັງງານໄຟຟ້າ: ໃນໄລຍະກໍ່ສ້າງ ບໍລິສັດ ມີຄວາມຕ້ອງການນຳໃຊ້ນ້ຳ ປະມານ 19 ມ3/ມື້ ແລະ ໄດ້ມາຈາກແຫຼ່ງນ້ຳທຳມະຊາດ ເຊິ່ງບໍລິສັດ ຈະເຈາະນ້ຳບາດານ ແລະ ສ້າງອ່າງເກັບນ້ຳ ຢູ່ໃນ ໂຮງງານ. ສຳລັບ ການນຳໃຊ້ພະລັງງານ ແມ່ນຈະດຶງມາຈາກຕາຂ່າຍໄຟຟ້າແຫ່ງຊາດ ເຊິ່ງຫ່າງຈາກຂອບຮົ້ວຂອງໂຮງງານ ປະມານ 100 ມ ແລະ ບໍລິສັດ ຈະຕິດຕັ້ງໝໍ້ແປ່ງໄຟ ຂອງໂຮງງານສະເພາະ;

PDF Compressor Free Version

ການຄົມມະນາຄົມຂົນສົ່ງ: ການກໍ່ສ້າງໂຮງງານ ເປັນໂຮງງານຂະໜາດນ້ອຍ ແລະ ເນື້ອທີ່ບໍ່ກ້ວາງ, ສະນັ້ນ ເຄື່ອງກົນຈັກໜັກ ແລະ ພາຫະນະຮັບໃຊ້ ແມ່ນບໍ່ຫຼາຍ;

ຜົນກະທົບຕໍ່ສຸຂະພາບ ຂອງກຳມະກອນ ແລະ ຊຸມຊົນ: ບັນຫາທີ່ເປັນຄວາມສ່ຽງ ຕໍ່ສຸຂະພາບ ຂອງພະນັກງານ, ກຳມະກອນ ແລະ ຊຸມຊົນ ແມ່ນຂີ້ຝຸ່ນ ແລະ ສຽງລົບກວນ, ບັນຫາດັ່ງກ່າວ ແມ່ນບໍ່ຮ້າຍແຮງ ແລະ ສາມາດປ້ອງກັນໄດ້ ເຊັ່ນ ຫົດນ້ຳ, ສະໜອງອຸປະກອນປົກປິດປາກ, ດັງ ແລະ ຫູ ໃຫ້ພະນັກງານ.

2. **ໄລຍະດຳເນີນການຜະລິດ.**

ຜົນກະທົບຕໍ່ອາກາດ: ໃນໄລຍະດຳເນີນການຜະລິດ ຜົນກະທົບຕໍ່ອາກາດ ທີ່ອາດຈະເກີດຂຶ້ນ ຈາກການສັງເຄາະ ທາດຊຸນເຟີໄດອ໋ອກໄຊ ແລະ ອາຊິດມິດ (Acid mist) ມີ 3 ກໍລະນີ ຄື (1) ມົນລະພິດຂອງອາຊິດມິດ (Acid mist) ຈາກຂະບວນການຜະລິດນ້ຳຢາອາຊິດຊຸນຟູລິກ, (2) ມົນລະພິດຂອງທາດຊຸນເຟີໄດອ໋ອກໄຊ ຈາກຂະບວນການຜະລິດ ນ້ຳຢາອາຊິດຊຸນຟູລິກ ແລະ (3) ມົນລະພິດຂອງທາດຊຸນເຟີໄດອ໋ອກໄຊ ເຊິ່ງອອກມາຈາກສະພາບອ້ອມຂ້າງ ໂຮງງານ ຜະລິດນ້ຳຢາອາຊິດຊຸນຟູລິກ;

ຜົນກະທົບຕໍ່ແຫຼ່ງນ້ຳ: ໂດຍປົກກະຕິ ໂຮງງານຜະລິດນ້ຳຢາອາຊິດຊຸນຟູລິກ ຈະບໍ່ມີບັນຫານ້ຳເສຍ ຈາກຂັ້ນຕອນ ແລະ ຂະບວນການຜະລິດ ແລະ ຈະບໍ່ມີຜົນກະທົບຕໍ່ແຫຼ່ງນ້ຳຢູ່ບໍລິເວນໃກ້ຄຽງໂຮງງານ, ບັນຫານ້ຳເສຍ ແມ່ນຈະມາມີ ໃນລະດູຝົນ ເມື່ອມີຝົນຕົກໜັກ ທີ່ອາດຈະຊະລ້າງສິ່ງເສດເຫຼືອ ຫຼືສານເຄມີ ທີ່ເກີດຈາກການຮົ່ວໄຫຼ ຂອງລະບົບທໍ່ສົ່ງ ຫຼື ຈຸດທີ່ມີການຊຶມຊັບຂອງທາດເຄມີ ໃນບໍລິເວນພື້ນທີ່ໂຮງງານ ປະກອບມີ: (1) ນ້ຳເສຍເກີດຈາກທາດອາຊິດ ແລະ ນ້ຳ ເສຍຈາກຂັ້ນຕອນການດຳເນີນງານ ຂອງຂະບວນການຜະລິດ, (2) ນ້ຳເສຍຈາກການປົນເປື້ອນສານເຄມີ, (3) ນ້ຳເສຍ ຈາກການປົນເປື້ອນ ຂອງນ້ຳມັນເຊື້ອໄຟຕ່າງໆ, (4) ນ້ຳເສຍທີ່ປົນເປື້ອນນ້ຳມັນກາແລັດ ແລະ (5) ນ້ຳເສຍຈາກລະບົບ ການຫັນປ່ຽນນ້ຳໃຫ້ກາຍເປັນນ້ຳເຢັນ;

ບັນຫາມົນລະພິດທາງສຽງ: ການຄາດຄະເນລະດັບສຽງດັງ ທີ່ເກີດຈາກໂຮງງານ ແມ່ນຢູ່ລະດັບສູງສຸດບໍ່ເກີນ 90 dB (A) ເຊິ່ງມາຈາກເຄື່ອງຈັກປ້ຳລົມ ແລະ ເຄື່ອງເຄື່ອງຈັກຜະລິດພະລັງງານໄຟຟ້າ;

ບັນຫາສິ່ງເສດເຫຼືອ: ສິ່ງເສດເຫຼືອ ຈາກໂຮງງານ ປະກອບມີ: ຂີ້ຕົມຂອງທາດຊຸນເຟີ ມີປະມານ 40 ກິໂລກຣາມ/ຄັ້ງ, ຂີ້ເຖົ່າ ແລະ ຂີ້ຕົມ ທີ່ເກີດຈາກການປະຕິກິລິຍາ ຂອງທາດຊຸນເຟີ ປະມານ 100 ກິໂລກຣາມ/ມື້ ແລະ ຂີ້ຕົມ ທີ່ເກີດຈາກຂະບວນການບຳບັດນ້ຳ ເພື່ອສະໜອງນ້ຳໃຫ້ຂະບວນການຜະລິດ ປະກອບມີຂີ້ດິນ, ຊາຍ ແລະ ອື່ນໆ ມີປະມານ 20 ກິໂລກຣາມ/ມື້;

ຜົນກະທົບຕໍ່ການນຳໃຊ້ນ້ຳ ແລະ ພະລັງງານໄຟຟ້າ: ຄາດຄະເນຄວາມຕ້ອງການນຳໃຊ້ນ້ຳ ໃນຊີວິດປະຈຳວັນ ປະມານ 1,2 ມ3/ຊົ່ວໂມງ ແລະ ໂຮງງານ ປະມານ 180 ມ3/ຊົ່ວໂມງ. ສຳລັບ ການນຳໃຊ້ພະລັງງານ ແມ່ນຈະດຶງມາ ຈາກຕາຂ່າຍໄຟຟ້າແຫ່ງຊາດ ເຊິ່ງຫ່າງຈາກຂອບຮົ້ວຂອງໂຮງງານ ປະມານ 100 ມ ແລະ ບໍລິສັດ ຈະຕິດຕັ້ງໝໍ້ແປງໄຟ ຂອງໂຮງງານສະເພາະ ແລະ ຈະບໍ່ມີຜົນກະທົບຕໍ່ການນຳໃຊ້ໄຟຟ້າ ຢູ່ໃນຕົວເມືອງພະລານໄຊ;

ການຄົມມະນາຄົມຂົນສົ່ງ: ໃນໄລຍະດຳເນີນການຜະລິດ ມີຄວາມຈຳເປັນ ຕ້ອງນຳໃຊ້ລົດບັນທຸກໜັກ ເພື່ອນຳ ເອົາວັດຖຸດິບ ເຂົ້າມາໂຮງງານ ແລະ ຂົນສົ່ງຜະລິດຕະພັນອອກຈາໂຮງງານ ແລະ ຈະບໍ່ສົ່ງຜົນກະທົບຕໍ່ເສັ້ນທາງ ເລກ 09 ແລະ ຄາດຄະເນ ລົດບັນທຸກໜັກ ເຂົ້າ-ອອກ ປະມານ 01 ຄັນຕໍ່ ອາທິດ;

ຜົນກະທົບຕໍ່ສຸຂະພາບ ຂອງກຳມະກອນ ແລະ ຊຸມຊົນ: ບັນຫາທີ່ເປັນຄວາມສ່ຽງ ຕໍ່ສຸຂະພາບ ຂອງພະນັກງານ, ກຳມະກອນ ແລະ ຊຸມຊົນ ແມ່ນເກີດມາຈາກ ການປະຕິກິລິຍາ ແລະ ການສັງເຄາະ ຂອງທາດຊຸນເຟີໄດອ໋ອກໄຊ (SO2) ແລະ ອາຊິດມິດ, ເຊິ່ງຈະເປັນອັນຕະລາຍ ໂດຍສະເພາະແມ່ນລະບົບການຫາຍໃຈ, ປອດ ແລະ ຕາ. ນອກຈາກ ນັ້ນ ກໍ່ຍັງມີກິ່ນເໝັນ ຢູ່ບໍລິເວນໂຮງງານ.

PDF Compressor Free Version

3. **ໄລຍະສິ້ນສຸດໂຄງການ.**

ສິ່ງທີ່ເປັນຜົນກະທົບ ໃນໄລຍະສິ້ນສຸດໂຄງການ ແມ່ນອາຄານເກົ່າ, ລະບົບການຜະລິດຂອງໂຮງ ງານ, ສາງ ເກັບມ້ຽຜະລິດຕະພັນ, ລະບົບອ່າງເກັບນ້ຳ ແລະ ອ່າງບຳບັດນ້ຳເສຍ.

V. **ມາດຕະການປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.**

1. **ຄຸນນະພາບອາກາດ.**

➢ **ໄລຍະກໍ່ສ້າງ**

- ລົດບັນທຸກແກ່ດິນ ຫຼື ວັດຖຸໜັກ ຕ້ອງມີຜ້າປົກປິດ ເພື່ອຫຼີກລ້ຽງການຕົກເຮ່ ແລະ ເກີດມົນລະພິດຕໍ່ອາກາດ;
- ອານາໄມຂໍ້ຕົມຕິດຕີນລົດ ກ່ອນຈະຂັບລົດອອກຈາກສະໜາມ ເພື່ອຫຼີກລ້ຽງ ແລະ ປ້ອງກັນ ບໍ່ ການຕົກເຮ່ ແລະ ເກີດມົນລະພິດຕໍ່ອາກາດ;
- ມີປ້າຍຫ້າມ ແລະ ປ້າຍເຕືອນຄວາມໄວ;
- ຫົດນ້ຳຫົນທາງ ຢ່ຳໜ້ອຍສະໜາມ 02 ຄັ້ງຕໍ່ວັນ.

➢ **ໄລຍະດຳເນີນການຜະລິດ**

- ຕິດຕັ້ງລະບົບດູດຊຶມ/ເກັບກ້ັ ມົນລະພິດຕໍ່ອາກາດ ຢ່ຳປາຍທໍ່ຄວັນ ຂອງໂຮງງານເພື່ອປ້ອງ;
- ມົນລະພິດທີ່ປ່ອຍອອກ ແມ່ນບໍ່ໃຫ້ເກີນ ມາດຕະຖານສິ່ງແວດລ້ອມ ແຫ່ງຊາດ ທີ່ກຳນົດໄວ້;
- ສະໜອງອຸປະກອນກວດກາ ທາດ SO3 ແລະ ທາດອາຊິດມິດ ແລະ ຕິດຕາມກວດກາທຸກໆເດືອນ;
- ຕິດຕັ້ງອຸປະກອນກວດກາ ທາດ SO2 ຢ່ຳປາຍທໍ່ຄວັນ ຂອງໂຮງງານ;
- ຖ້ຳຫາກປະລິມານທາດ SO2 ເກີນມາດຕະຖານ ຕ້ອງແກ້ໄຂດ່ວນ ຫຼື ປິດເຄື່ອງຈັກຊົ່ວຄາວ.

2. **ຄຸນນະພາບນ້ຳ.**

➢ **ໄລຍະກໍ່ສ້າງ**

- ໃຊ້ເຄື່ອງຈັກສູບນ້ຳ ຈາກຮ່ອງລະບາຍນ້ຳເສຍ ໄປບຳບັດຢ່ຳອ່າງເກັບນ້ຳຊົ່ວຄາວ;
- ລຸດຜ່ອນດິນເຈາະເຈື່ອນ ປົກຫຸ້ມເຂດທີ່ມີການກໍ່ສ້າງ;
- ນ້ຳເສຍຈາກການຊະລ້າງອຸປະກອນຕ່າງໆ ຕ້ອງໄດ້ຜ່ານຂະບວນການບຳບັດ;
- ເສດນ້ຳມັນຕ້ອງໄດ້ເກັບມ້ຽໃສ່ຖັງພະສະດຸທີ່ເໝາະສົມ ແລະ ນຳໄປບຳບັດ ຫຼື ກຳຈັດໃຫ້ຖືກວິທີກໄລຍະ ດຳເນີນການຜະລິດປ້ອລະບັດຮັກສາ ລະບົບບຳບັດນ້ຳເສຍໃຫ້ສາມາດໃຊ້ງານໄດ້;
- ຖ້ຳລະບົບບຳບັດນ້ຳເສຍ ບໍ່ສາມາດທຳການບຳບັດໄດ້, ນ້ຳເສຍດັ່ງກ່າວ ຕ້ອງໃຊ້ຈັກສູບນ້ຳສູບກັບຄືນອ່າງ ລະລາຍນ້ຳ ເພື່ອໄປບຳບັດຄືນ;
- ຕ້ອງມີພະນັກງານຄຸມງານ ທີ່ມີປະສົບການ ໃນການຄວບຄຸມລະບົບບຳບັດນ້ຳເສຍ;
- ກໍລະນີ ລະບົບບຳບັດນ້ຳເສຍ ເກີດມາການພົດພາດ ຕ້ອງໄດ້ດຳເນີນດັ່ງນີ້: ເກັບມ້ຽນ້ຳເສຍໄວ້ໃນອ່າງເກັບນ້ຳ ແລະ ບໍ່ອະນຸຍາດໃຫ້ປ່ອຍອອກສູ່ທຳມະຊາດ ໂດຍບໍ່ໄດ້ຜ່ານຂະບວນການ ບຳບັດ, ສ້ອມແປງລະບົບເຄື່ອງຈັກ ບຳບັດໜ້ຳເສຍທີ່ເປ່ຍ່ວນ;
- ນຳໃຊ້ນຳທີ່ຜ່ານຂະບວນການບຳບັດ ເພື່ອຫົດທາງ, ຕົ້ນໄມ້ ຫຼື ຫົດນ້ຳຫຍ້ຳ;
- ນ້ຳເສຍ ຈາກຂະບວນການສະລ້ຳງທາດຊູນເຟ ຈະຕ້ອງໄດ້ມີການບຳບັດ ຍ້ອນມີທາດ NaOH ເຈືອນປົນຢ່ຳ.

3. **ມົນລະພິດທາງສຽງ.**

➢ **ໄລຍະກໍ່ສ້າງ**

- ກິດຈະການກໍ່ສ້ຳງທີ່ມີສຽງລົບກວນ ແລະ ເປັນກະທົບຕໍ່ຊຸມຊົນໃກ້ຄຽງ ແມ່ນບໍ່ອະນຸຍາດໃຫ້ດຳເນີນ ໃນເວລາ ກ່ຳງຄືນ;

PDF Compressor Free Version

- ບັງຂັບໃຫ້ຜູ້ຮັບເໝົາກໍ່ສ້າງ ປະຕິບັດຕາມລະບຽບ ແລະ ໃຫ້ມີການກວດກາ ແລະ ສ້ອມແປງເຄື່ອງຈັກ, ອຸປະກອນທີ່ກໍ່ໃຫ້ເກີດມີສຽງລົບກວນຮ້າຍແຮງ.

➢ **ໄລຍະດຳເນີນການຜະລິດ.**

- ຈັດໃຫ້ມີການວັດແທກສຽງທີ່ເກີດຂຶ້ນ ຈາກເຄື່ອງຈັກ ແລະ ອຸປະກອນຕ່າງໆຢູ່ໃນໂຮງງານ;
- ດຳເນີນການຕິດຕາມກວດກາ ແລະ ສ້ອມແປງອຸປະກອນ ແລະ ເຄື່ອງຈັກຢູ່ໃນໂຮງງານ;
- ສະໜອງອຸປະກອນປິດຫູ ໃຫ້ພະນັກງານເຮັດວຽກ ທີ່ມີຄວາມສ່ຽງຕໍ່ມົນລະພິດທາງສຽງ.

4. **ສິ່ງເສດເຫຼືອ.**

➢ **ໄລຍະກໍ່ສ້າງ**

- ຜູ້ພັດທະນາໂຄງການ ແລະ ຜູ້ຮັບເໝົາກໍ່ສ້າງ ຕ້ອງຈັດຫາສະຖານທີ່ເກັບມ້ຽນສິ່ງເສດເຫຼືອຈາກການກໍ່ສ້າງ ແລະ ການນຳໃຊ້ໃນຊີວິດປະຈຳວັນ ຂອງກຳມະກອນ;
- ຫ້າມບໍ່ໃຫ້ກຳຈັດສິ່ງເສດເຫຼືອລົງໃສ່ຮ່ອງລະບາຍນ້ຳ ຫຼື ຫ້ວຍນ້ຳລຳເຊ ຕ່າງໆ.

➢ **ໄລຍະດຳເນີນການຜະລິດ**

- ທາດເຄມີທີ່ນຳເຂົ້າມາ ແລະ ໝົດຄຸນນະພາບກ່ອນການນຳໃຊ້ ຈະຖືກສົ່ງຄືນ ໃຫ້ບໍລິສັດ ຜູ້ຜະລິດ;
- ການດຳເນີນ ຈະກໍ່ໃຫ້ເກີດຂີ້ເຖົ່າ ຢູ່ເຕົາເຜົາທາດຊຸນເຟ ປະມານ 100 ກິໂລກຣາມ/ມື້ ແລະ ຂີ້ເຖົ່າຕົ້ງກ່າວ ຈະຖືກອານາໄມທຸກໆ 03 ປີ ແລະ ຈະນຳໄປກຳຈັດຢູ່ບ່ອນທີ່ມີການຈັດສັນຂີ້ເຫຍື້ອ ແລະ ຈະຕ້ອງຜ່ານການວິໃຈ ຈະປະກອບມີຄ່າ: ທາດອາເຊນິກ, ທາດກົ່ວ, ທາດບາ ຣຽມ, ທາດແຄດມຽມ ແລະ ທາດເຊເລນຽມ;
- ຂີ້ຕົມຈາກການບຳບັດນ້ຳຈາກທຳມະຊາດ ຈະມີປະມານ 20 ກິໂລຣາມ/ມື້ ແລະ ຈະຖືກນຳໄປຖິ້ມຢູ່ບ່ອນເກັບຂີ້ເຫຍື້ອທົ່ວໄປ ເພາະບໍ່ມີສ່ວນປະສົມທາດເຄມີ;
- ເສດນ້ຳມັນ ທີ່ສະສົມໄດ້ຈາກຂະບວນການຜະລິດ ຂອງເຄື່ອງຈັກ ຈະຖືກນຳໄປເກັບໄວ້ໃນຖັງ 200 ລິດ ແລະ ຈະນຳໄປກຳຈັດສະເພາະ;

5. **ສຸຂະພາບ ຂອງກຳມະກອນ ແລະ ຊຸມຊົນ**

➢ **ໄລຍະກໍ່ສ້າງ**

- ຜູ້ພັດທະນາໂຄງການ ຈະສະໜອງນ້ຳໃຊ້ ແລະ ນ້ຳດື່ມ ໃຫ້ພະນັກງານ ແລະ ກຳມະກອນ ຢ່າງພຽງພໍ;
- ບໍລິສັດ ຈະປະສານສົມທົບ ກັບໜ່ວຍງານ/ພະແນກສາທາລະນະສຸກ ເມືອງ ແລະ ແຂວງ ເພື່ອປ້ອງກັນ ແລະ ແກ້ໄຂ ບັນຫາທີ່ອາດຈະເກີດຂຶ້ນ ຢູ່ເຂດໂຄງການ ແລະ ຊຸມຊົນໃກ້ຄຽງ;
- ບໍລິສັດ ຮັບເໝົາກໍ່ສ້າງ ຕ້ອງສະໜອງອຸປະກອນປ້ອງກັນຜົນກະທົບ ຕໍ່ສຸຂະພາບໃຫ້ກຳມະ ກອນ ແລະ ຕ້ອງ ເອົາໃຈໃສ່ບັນຫາຄວາມປອດໄພ ຕໍ່ສຸຂະພາບ;
- ເມື່ອມີອຸບັດຕິເຫດ ໃນເວລາກໍ່ສ້າງ, ຜູ້ຮັບເໝົາ ຕ້ອງລາຍງານດ່ວນ ໃຫ້ບໍລິສັດ ລາວມີໄຊ ຈຳ ກັດ ຊາບ;
- ບໍລິສັດ ຜູ້ຮັບ ຕ້ອງມີການຕິດຕາມກວດກາ ແລະ ສ້ອມແປງພາຫະນະ-ເຄື່ອງຈັກ ເປັນປົກ ກະຕິ.

➢ **ໄລຍະດຳເນີນການຜະລິດ**

- ຕິດຕັ້ງລະບົບເຕືອນໄພ ຢູ່ບ່ອນທີ່ມີຄວາມຈຳເປັນ ເຊັ່ນ: ລະບົບເຕືອນໄພມົນລະພິດທາງສຽງ, ຄວາມຮ້ອນ ເກີນ ແລະ ການລະເຫີຍອາຍຂອງອາຊິດ;
- ໃຫ້ພະນັກງານ ທີ່ເຮັດວຽກໃນໂຮງງານ ຕ້ອງນຸ່ງເຄື່ອງປ້ອງກັນທຸກຄັ້ງ ແລະ ໃຫ້ຖືກຕາມຄູ່ມືນຳໃຊ້;
- ຈັດຫາບ່ອນອາບນ້ຳ ແລະ ລ້າງຕາ ໃນກໍລະນີເກີດອຸບັດຕິເຫດ ຫຼື ເຫດການສຸກເສີນ;
- ຈັດຝຶກອົບຮົມ ໃຫ້ພະນັກງານຄຸ້ມຄອງໂຮງງານ ແລະ ພະນັກງານວິຊາການ ກ່ຽວກັບ ການປະຖົມພະຍາບານ, ຄວາມປອດໄພ ແລະ ຄວາມສະອາດ ຢ່າງໜ້ອຍ 1 ຄັ້ງ/ປີ;

PDF Compressor Free Version

- ດຳເນີນມາດຕະການປ້ອງກັນຜົນກະທົບຈາກສານເຄມີ ທີ່ເປັນອັນຕະລາຍ ເຊັ່ນ: ກວດກາເປັນປະຈຳ ຜົນກະທົບທີ່ເປັນຕະລາຍ ຈາກສານເຄມີທີ່ນຳໃຊ້ໃນໂຮງງານ, ສະໜອງຂໍ້ມູນ ແລະ ລາຍລະອຽດ ຂອງທາດເຄມີ ແຕ່ລະຊະນິດ, ສະໜອງອຸປະກອນ ແລະ ເຄື່ອງນຸ່ງປ້ອງກັນຕົວ ຄື: ເກີບໂບກ, ຖົງມື, ຖົງອົກຊີ, ໜ້າກາກປິດປາກ-ປິດໜ້າ ແລະ ອື່ນໆ;
- ຕິດປ້າຍເຕືອນ ໃສ່ສະຖານທີ່ ທີ່ມີຄວາມສ່ຽງ ແລະ ສານເຄມີທີ່ເປັນອັນຕະລາຍ;
- ກວດກາສຸຂະພາບ ຂອງພະນັກງານກ່ອນຮັບເອົາ ແລະ ກວດເປັນປະຈຳ;

PDF Compressor Free Version

ບໍລິສັດ ລາວມີໄຊ ຈຳກັດ
LAO ME SAI CO.,LTD.

ສະພາບລວມບໍລິສັດ ລາວມີໄຊ ຈຳກັດ

- ລາຍງານການຜະລິດຈະຫວ່າງປີ 2016-2017

ປີການຜະລິດ	ຜຸລິດໄດ້ ຕັນ: H_2SO_4	ຂາຍໄດ້ ຕັນ: H_2SO_4	ມູນຄ່າ ຫົວໜ່ວຍໂດລາ	ລາໄຊ ຫົວໜ່ວຍ ໂດລາ
ປີ ...	... ຕັນ	... ຕັນ	... ໂດລາ	...
ປີ ... ເດືອນ ...	... ຕັນ	... ຕັນ	... ໂດລາ	...

PLANT LAY OUT



ສະພາບລວມ

- ບໍລິສັດ ລາວມີໄຊ ຈຳກັດ ສ້າງຕັ້ງຂຶ້ນໃນປີ 2010
ດຳເນີນການຜະລິດໃນປີ 2012
- ເຈົ້າຂອງບໍລິສັດ ຕັ້ນຄົນດ່ຽວ ປະເທດ ປະເທດໄທ
- ທຶນຈົດທະບຽນ 5,000,000.00 ໂດລາສະຫະລັດ
- ບ່ານເຮົ້າທີ່ ທັງໝົດ 10,000,000.00 ໂດລາສະຫະລັດ
- ບ່ານໃຊ້ແຮງງານ 40 ຄົນ, ພາຍໃນ 30 ຄົນ, ນິ 1 ຄົນ ດ່ຽວ ປະເທດ 9 ຄົນ
- ຜະລິດບ່ານອາຊິດຊຸນຟູຣິກ (H_2SO_4) 98% ຂໍ້ ... ລາຍບ່ ... ໃນ
- ປີ 2015 ບໍລິສັດ ໄດ້ຢຸດການຜະລິດ ເນື່ອງຈາກບ່ ... ໄດ້ ... ແລະ ... ກັບ ... ແຮງງານ ໃນ ... 2015
- ບໍລິສັດ ໄດ້ ... ການຜະລິດ ... ໃນ ... 2017

ການສ້າງອາກອນໃຫ້ລັດໃນແຕ່ລະປີ

ປີ	ຈຳນວນເງິນ (ກີບ)
2012	3,141,453,929
2013	2,898,487,446
2014	2,483,958,680
2015	1,453,035,029
2016	272,429,141
ລວມທັງໝົດ	10,241,364,225

PDF Compressor Free Version

SULFURIC ACID PLANT

1. CAPACITY 130 TPD
2. PRODUCED FROM SULFUR
3. SULFURIC ACID 98.5 %
4. POWER ELECTRICITY 1.5 MW
5. EMISSION LESS THAN 500 ppm

Production of sulfuric acids (Stage 1)



Sulfur is imported from Thailand. In the first stage of the process, sulfur is burned in air to make sulfur dioxide gas.

Sulfur oxygen->sulfur dioxide

$S(l) + O_2(g) \rightarrow SO_2(g)$

Sulphuric Acid Process : Capacity 130 TPD



Production of sulfuric acids (Stage 2)



This is the stage where sulfur dioxide is converted to sulfur trioxide.

->

Sulfur dioxide+ oxygen sulfur trioxide

<- ->

$2SO_2(g) + O_2(g) \quad 2SO_3(g)$

<-

The reaction happens on catalysis of vanadium(V) oxide to speed up the reaction. As much sulphur dioxide as possible is changed to sulphur trioxide, and releases of sulphur dioxide are prevented such that acid rains will not be caused.

Production of sulfuric acids (The contact process DCDA)

- The most important process for making sulfric acids.
- Consists of 3 stages.



Production of sulfuric acids (Stage 3)



In the final stage, sulfur trioxide is converted to sulfuric acid. The sulfur trioxide gas is absorbed into very concentrated sulfuric acid (a 98 per cent solution of H_2SO_4 in water), producing a thick fuming liquid called oleum. The oleum is mixed carefully with water, and the sulfuric trioxide in the oleum reacts with the water as follows:

Sulfur trioxide+ water -> sulfuric acid

$SO_3(g) + H_2O(l) \rightarrow H_2SO_4(l)$

PDF Compressor Free Version

ດ້ານສິ່ງແວດລ້ອມ

- ຮ່ວມກອງປະຊຸມສ້ຽງສະພາ
- ຮ່ວມກອງປະຊຸມ
- ...
- ...
- ...

ການປະຕິບັດຕາມແຜນຂອງກອງປະຊຸມ ຄັ້ງທີ ... ກັນຍາ ...

- ...
- ...
- ...

ພາບປະກອບການປັບປຸງກ່ອນເລີ່ມການ ຜະລິດ

PDF Compressor Free Version

SCREEN CATALYST OF CONVERTOR

ການວັດແທກແລະວິໃຈຄຸນນະພາບ ສິ່ງແວດລ້ອມ



สภาพใต้ BED หลังจากเอา CATALYST ออกทั้งหมด



PDF Compressor Free Version





*ຂໍຂອບໃຈ

PDF Compressor Free Version

4. ເອກະສານຄັດຕິດທີ 2

- ຮູບພາບຕົວຈິງໃນພາກສະໜາມ

PDF Compressor Free Version

ເຂົ້າພົບບໍລິສັດ ແລະ ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງສິ່ງແວດລ້ອມສັງຄົມ ແລະ ທຳມະຊາດຂອງໂຄງການໃນໄລຍະຜ່ານມາ

ພົບປະປະຊາຊົນ ແລະ ນາຍບ້ານບ້ານແກ້ງຫຼວງ ເພື່ອຮັບຟັງການລາຍງານບັນຫາຜົນກະທົບ, ການແກ້ໄຂບັນຫາຕ່າງໆໃນໄລຍະຜ່ານມາ ແລະ ຂໍ້ຄິດເຫັນຂອງປະຊາຊົນ

PDF Compressor Free Version

ລົງກວດກາພົ້ນທີ່ຕົວຈິງ ພາຍໃນໂຮງງານ

ໂຮງເຕົາຫຼອມມາດ (ລະບົບປິດຝາເຕົາ)

PDF Compressor Free Version

ບັນດາເຂດມາດຕິກເຮ່ຍຕາມທາງ ແລະ ໂຮງເຕົ້າຫຼອມ

PDF Compressor Free Version



ສາງເກັບມ້ຽນມາດ

PDF Compressor Free Version

ຄອງລະບາຍນ້ຳພາຍໃນໂຮງງານ ຍັງບໍ່ໄດ້ມາດຕະຖານ

ສາງເກັບມ້ຽນສານເຄມີຍັງບໍ່ເປັນລະບຽບປິດ

PDF Compressor Free Version

ສະຖານທີ່ເກັບມ້ຽນຖິ້ງບັນຈຸມາດ ຕິດກັບແຫ່ງນ້ຳ

PDF Compressor Free Version

ວັດຄຸນນະພາບນ້ຳ ພາຍໃນໜອງເກັບນ້ຳຂອງໂຮງງານ

ກອງປະຊຸມປຶກສາຫາລື ແລະ ສ້າງບົດບັນທຶກຮ່ວມກັບບໍລິສັດ

PDF Compressor Free Version